ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----===000===-----

ສຳນັກງານນາຍົກລັດຖະມົນຕີ

ເລກທີ 145/ນຍ.

ນະຄອນຫຼວງວຽງຈັນ, ວັນທີ 19.08.2008

# ດຳລັດ

## ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2008-2009

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ,
- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6/5/2003,
- ອີງຕາມ ກົດໝາຍ ວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 02/ສພຊ, ລົງວັນທີ 26/12/2006,
- ອີງຕາມ ມະຕິກອງປະຊຸມສະໄໝສາມັນເທື່ອທີ 05 ຂອງສະພາແຫ່ງຊາດຊຸດທີ VI, ສະບັບເລກທີ 92/ ສພຊ-VI, ລົງວັນທີ 26 ກໍລະກົດ 2008 ວ່າດ້ວຍການຮັບຮອງເອົາການຈັດຕັ້ງປະຕິບັດກາງສະໄໝ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VI (2006-2010) ແລະ ແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2008-2009 ແລະ ສະບັບເລກທີ 93/ ສພຊ-VI, ລົງວັນທີ 26 ກໍລະກົດ 2008 ວ່າດ້ວຍການຮັບຮອງເອົາບົດສະຫລຸບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ສົກປີ 2007-2008 ແລະ ແຜນງົບປະມານແຫ່ງລັດ ສົກປີ 2008-2009.

### ນາຍົກລັດຖະມົນຕີ ອອກດຳລັດ:

ມາດຕາ 1. ປະກາດໃຊ້ ແລະ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2008-2009, ເລີ່ມແຕ່ວັນທີ 01 ຕຸລາ ປີ 2008 ເຖິງວັນທີ 30 ກັນຍາ ປີ 2009 ຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ.

ມາດຕາ 2. ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2008-2009 ແມ່ນແຜນຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກ, ມະຕິກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ VI ໃຫ້ປະກົດຜົນເປັນຈິງ, ໂດຍມີທິດທາງ ແລະ ໜ້າທີ່, ບັນດາຄາດໝາຍຕົ້ນຕໍ ແລະ ການດຸນດ່ຽງໃຫຍ່ ຂອງເສດຖະກິດມະຫາພາກ; ຄາດໝາຍການລຶບລ້າງຄວາມທຸກຍາກ ແລະ ຫຼຸດຜ່ອນການຖາງປ່າ-ເຮັດໄຮ່; ກຳນົດໂຄງປະກອບການພັດທະນາຕາມຂະແໜງການ ແລະ ການພັດ

ທະນາເຂດແຄວ້ນ; ກຳນົດແຜນງານ, ໂຄງການ, ແຜນເງິນ, ແຜນຄົນ, ບັນດາມາດຕະການ ແລະ ວິທີການຕົ້ນຕໍ ເພື່ອຈັດຕັ້ງປະຕິບັດຈຸດໝາຍລວມ, ທິດທາງ ແລະ ຄາດໝາຍສູ້ຊົນ ທີ່ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI ( 2006-2010 ) ໂດຍສະເພາະ ແມ່ນສຸມໃສ່ ການຈັດຕັ້ງຜັນຂະຫຍາຍ 11 ແຜນງານໃຫຍ່ 111 ໂຄງການບູລິມະສິດຂອງລັດຖະບານ.

ມາດຕາ 3. ຄາດໝາຍສູ້ຊົນດ້ານເສດຖະກິດມະຫາພາກ ໃນສົກປີ 2008-2009 ມີດັ່ງນີ້ :

- ລວມຍອດຜະລິດຕະພັນພາຍໃນ (GDP) ທຽບໃສ່ສົກປີ 2007-2008 ເພີ່ມຂຶ້ນ 8%, ໝາຍວ່າລວມຍອດຜະລິດຕະພັນພາຍໃນ ສະເລັ່ຍຕໍ່ຫົວຄົນ ຈະໄດ້ 8,35 ລ້ານກີບ; ໃນນັ້ນ:
  - + ຍອດຜະລິດຕະພັນກະສິກຳ-ປ່າໄມ້ ໃຫ້ເພີ່ມຂຶ້ນ 3,4%, ກວມເອົາ 29,9% ຂອງ GDP;
  - + ຍອດຜະລິດຕະພັນອຸດສາຫະກຳ ໃຫ້ເພີ່ມຂຶ້ນ 15,8%, ກວມ 29,0% ຂອງ GDP ແລະ
  - + ຍອດຜະລິດຕະພັນການບໍລິການ ໃຫ້ເພີ່ມຂຶ້ນ 7,7%, ກວມ 37,0% ຂອງ GDP (ບໍ່ລວມພາສີຂາເຂົ້າ).

- ເກັບລາຍຮັບເຂົ້າງົບປະມານທັງໝົດໃຫ້ໄດ້ໃນລະດັບ 16,49% ຂອງມູນຄ່າ GDP ໃນນັ້ນ, ລາຍຮັບພາຍໃນເທົ່າກັບ 15,00% ແລະ ລາຍຮັບຈາກການຊ່ວຍເຫລືອຈາກຕ່າງປະເທດຕ່າງປະເທດ ເທົ່າກັບ 1,49% ຂອງມູນຄ່າ GDP. ລາຍຈ່າຍງົບປະມານທັງໝົດໃຫ້ ຢູ່ໃນລະດັບ 19,82% ຂອງມູນຄ່າ GDP, ເຮັດໃຫ້ຂາດດຸນງົບປະມານ ຢູ່ໃນລະດັບ 3,33% ຂອງມູນຄ່າ GDP.

- ສູ້ຊົນຮັກສາອັດຕາເງິນເຟີ້ສະເລ່ຍໃຫ້ຢູ່ໃນລະດັບຕົວເລກດຽວ.

- ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫລາດທີ່ມີການຄຸ້ມຄອງຂອງລັດ, ເຮັດໃຫ້ອັດຕາແລກປ່ຽນມີຄວາມສະຫງົບປົກກະຕິ ເງິນກີບແຂງຄ່າ ຫລື ອ່ອນຄ່າຢູ່ໃນລະຫວ່າງ 5% ທຽບໃສ່ເງິນຕາຕ່າງປະເທດສະກຸນຫຼັກ.

- ລະດົມເງິນຝາກໃຫ້ເພີ້ມຂຶ້ນຢ່າງໜ້ອຍ 38% ຂອງຍອດທຶນລະດົມ ທ້າຍສົກປີ 2007-2008 ແລະ ປ່ອຍສິນເຊື່ອ ເພີ່ມຂຶ້ນບໍ່ຕ່ຳກວ່າ 26% ທຽບໃສ່ຍອດສິນເຊື່ອທ້າຍປີ 2007-08.

- ເຮັດໃຫ້ການສົ່ງອອກສິນຄ້າ ທີ່ຜະລິດພາຍໃນປະເທດເພີ່ມຂຶ້ນ ແລະ ເຮັດໃຫ້ການຂາດດຸນການຄ້າ ກັບຕ່າງປະເທດຫຼຸດລົງ ດ້ວຍການອຳນວຍຄວາມສະດວກ ແລະ ສົ່ງເສີມການສົ່ງອອກໃຫ້ຫຼາຍຂຶ້ນ. ຄຸ້ມຄອງດຸນການຊຳລະກັບຕ່າງປະເທດ ໃຫ້ຢູ່ໃນລະດັບທີ່ເໝາະສົມ.

- ຊຸກຍູ້ສົ່ງເສີມການລົງທຶນທົ່ວສັງຄົມໃຫ້ໄດ້ປະມານ 32% ຂອງ GDP.

ມາດຕາ 4. ຄາດໝາຍສູ້ຊົນຕົ້ນຕໍດ້ານເສດຖະກິດ ມີດັ່ງນີ້:

- ສູ້ຊົນຜະລິດເຂົ້າໃຫ້ໄດ້ 3,15 ລ້ານໂຕນ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 6,24%.

- ສູ້ຊົນຜະລິດກະແສໄຟຟ້າໝົດປີໃຫ້ໄດ້3.516,5 ລ້ານກິໂລວັດໂມງ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 0,7%.

- ສູ້ຊົນເຮັດໃຫ້ມູນຄ່າການຜະລິດຂອງຂະແໜງອຸດສາຫະກຳປຸງແຕ່ງບັນລຸ ໃຫ້ໄດ້ 404,63 ຕື້ກີບ ທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 6,4%.

- ສູ້ຊົນເຮັດໃຫ້ມູນຄ່າການສົ່ງອອກ ບັນລຸໄດ້ 1.025,1 ລ້ານໂດລາ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 2% ມູນຄ່າການນຳເຂົ້າ ບັນລຸໄດ້ 1.012,0 ລ້ານໂດລາ ທຽບໃສ່ປີຜ່ານມາຫລຸດລົງ 7,2%.

- ສືບຕໍ່ຂະຫຍາຍຕາໜ່າງໂທລະຄົມອອກສູ້ຊົນນະບົດໃຫ້ກວ້າງຂວາງອອກຕື່ມ, ຍົກສູງຄຸນນະພາບ ແລະ ຂະຫຍາຍການບໍລິການໂທລະສັບທີ່ມີຢູ່ໃນຕົວເມືອງ ລົງສູ່ຂັ້ນບ້ານໃຫ້ໄດ້ 70% ທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 10% ຂອງຈຳນວນບ້ານທັງໝົດ.

- ສູ້ຊົນເຮັດໃຫ້ນັກທ່ອງທ່ຽວເຂົ້າມາປະເທດ ປະມານ 2,1 ລ້ານຄົນ ເພີ່ມຂຶ້ນ 16,7% ທຽບໃສ່ປີຜ່ານມາ.

- ສູ້ຊົນຫລຸດຜ່ອນເນື້ອທີ່ຖາງປ່າເຮັດໄຮ່ປູກເຂົ້າແບບເລື່ອນລອຍຈາກ 8.025 ເຮັກຕາ ໃນສົກປີ 2007-2008 ໃຫ້ຍັງເຫລືອ 4.600 ເຮັກຕາ ໃນທ້າຍສົກປີ 2008-2009, ຫຼຸດຄອບຄົວຖາງປ່າເຮັດໄຮ່ຈາກ 14.433 ຄອບຄົວ ໃນສົກປີ 2007-08 ໃຫ້ຍັງເຫລືອ 5.433 ຄອບຄົວ ໃນທ້າຍສົກປີ 2008-2009.

ມາດຕາ 5. ຄາດໝາຍສູ້ຊົນຕົ້ນຕໍດ້ານສັງຄົມ ມີດັ່ງນີ້:

- ສູ້ຊົນເຮັດໃຫ້ອັດຕາເຂົ້າຮຽນລວມ ໃນຂັ້ນອະນຸບານໃຫ້ໄດ້ 16%, ອັດຕາເຂົ້າຮຽນສຸດທິ ຂອງຂັ້ນປະຖົມ 91%, ມັດທະຍົມຕອນຕົ້ນ 68%, ມັດທະຍົມຕອນປາຍ 40%; ເພີ່ມອັດຕາການຮູ້ໜັງສືຂອງຜູ້ໃຫຍ່ ອາຍຸ 15 ປີຂຶ້ນໄປໃຫ້ໄດ້ 78%, ໃນນັ້ນ ອັດຕາການຮູ້ໜັງສືໃນເກນອາຍຸ 15-24 ປີ 88% ແລະ ເພີ່ມອັດຕາສ່ວນນັກສຶກສາຕໍ່ປະຊາກອນໃຫ້ໄດ້ 1.122 ຄົນ ຕໍ່ ປະຊາກອນແສນຄົນ.

- ສະໜອງນ້ຳສະອາດແກ່ປະຊາຊົນໃຫ້ໄດ້ 76%, ນຳໃຊ້ວິດຖ່າຍຂອງປະຊາຊົນ ໃຫ້ໄດ້ 50%, ອັດຕາການຊົມໃຊ້ວິດຖ່າຍໃນໂຮງຮຽນ 20%, ສັກຢາກັນພະຍາດເດັກນ້ອຍໃຫ້ໄດ້ 80%, ຮັກສາອັດຕາການຕິດເຊື້ອໄວຣັດ HIV ໃນປະຊາກອນ ຢູ່ລະດັບຕ່ຳກວ່າ 0,1%, ອັດຕາຜົນຂອງການປິ່ນປົວແບບມີແພດຕິດຕາມ(DOTS) ສຳລັບຄົນເປັນພະຍາດວັນນະໂລກ ໃຫ້ໄດ້ຫຼາຍກວ່າ 90%. ສະໜອງມຸ້ງຍ້ອມຢາ 150.000 ດາງ ໃຫ້ປະຊາຊົນໃນເຂດສ່ຽງຕໍ່ໄຂ້ຍຸງ ເພື່ອເຮັດໃຫ້ອັດຕາການເປັນໄຂ້ຍຸງ ຕ່ຳກວ່າ 2,9 ຕໍ່ 1.000 ຄົນ.

- ຂະຫຍາຍຕາໜ່າງການຝຶກວິຊາຊີບ ໂດຍຮ່ວມກັບສູນຝຶກວິຊາຊີບຂອງ 3 ອົງການຈັດຕັ້ງມະຫາຊົນ ແລະ ບັນດາກະຊວງກ່ຽວຂ້ອງອື່ນໆ ເພື່ອໃຫ້ນັກຮຽນທີ່ຮຽນຈົບ ມໍຕົ້ນ ແລະ ມໍປາຍ ໄດ້ຝຶກວິຊາຊີບໃຫ້ໄດ້ 13.000 ຫາ 14.000 ຄົນ, ສ້າງວຽກເຮັດງານທຳໃຫ້ໄດ້ຫລາຍກວ່າ 100.000 ຄົນ.

- ສືບຕໍ່ປັບປຸງຕາໜ່າງຖະແຫລງຂ່າວ ແລະ ວັດທະນະທຳໃຫ້ດີຂຶ້ນ ເປັນຕົ້ນແມ່ນຂະຫຍາຍລະບົບສື່ມວນຊົນລົງສູ່ທ້ອງຖິ່ນ ເພື່ອສະໜອງຂໍ້ມູນຂ່າວສານ, ສາລະຄວາມຮູ້ ແລະ ຄວາມບັນເທີງໃຫ້ກວ້າງຂວາງຂຶ້ນກວ່າເກົ່າ.

- ເອົາໃຈໃສ່ກຽມຄວາມພ້ອມໃນການເປີດງານມະຫາກຳກິລາແຫ່ງຊາດ ຄັ້ງທີ່ 8 ຢູ່ແຂວງຈຳປາສັກ ແລະ ການເປັນເຈົ້າພາບຈັດງານແຂ່ງຂັນກິລາ ຊີເກມ 2009.
- ເອົາໃຈໃສ່ແກ້ໄຂຄວາມທຸກຍາກຢ່າງມີຈຸດສຸມ ເຮັດໃຫ້ຕົວເລກອັດຕາຄົວເຮືອນທຸກຍາກຫຼຸດລົງ 3% ຂອງຈຳນວນຄົວເຮືອນທຸກຍາກທັງໝົດ, ໃນນັ້ນ ຈະເລັ່ງໃສ່ສ້າງແຜນກຸ່ມບ້ານແບບມີສ່ວນຮ່ວມໃຫ້ໄດ້ຕື່ມອີກ 15 ກຸ່ມບ້ານ ຂອງເມືອງທຸກຍາກທີ່ຍັງເຫຼືອ.

ມາດຕາ 6 . ໃຫ້ສູ້ຊົນປະຕິບັດແຜນລາຍຮັບ ແລະ ລາຍຈ່າຍງົບປະມານປະຈຳປີ ຕາມຕົວເລກທີ່ສະພາແຫ່ງຊາດໄດ້ຮັບຮອງເອົາ ໃຫ້ປະກົດເປັນຈິງ ຄື :

6.1 ລາຍຮັບງົບປະມານ.

| ລາຍການ | ມູນຄ່າ | | ໂຄງປະກອບ |
|---|---|---|---|
| - ລວມຍອດລາຍຮັບງົບປະມານທັງໝົດ (ລວມທັງທຶນຊ່ວຍເຫລືອລ້າ) | 8.340,77 | ຕື້ກີບ; | 100,00 % |
| ໃນນັ້ນ: | | | |
| + ລາຍຮັບງົບປະມານພາຍໃນ | 7.589 | ຕື້ກີບ; | 90,99 % |
| • ລາຍຮັບຈາກສ່ວຍສາອາກອນ | 3.520 | ຕື້ກີບ; | 42,20 % |
| • ລາຍຮັບຈາກພາສີ-ອາກອນ (ຂາເຂົ້າ -ຂາອອກ) | 2.270 | ຕື້ກີບ; | 27,22 % |
| • ລາຍຮັບຈາກຊັບສິນ ຂອງລັດ | 938 | ຕື້ກີບ; | 11,25 % |
| • ລາຍຮັບຈາກການຄຸ້ມຄອງລັດວິສາຫະກິດ | 681 | ຕື້ກີບ; | 8,16 % |
| • ລາຍຮັບຈາກທີ່ດິນ | 80 | ຕື້ກີບ; | 0,96 % |
| • ລາຍຮັບຈາກຊັບພະຍາກອນໄມ້ | 100 | ຕື້ກີບ; | 1,20 % |
| + ລາຍຮັບຈາກການຊ່ວຍເຫລືອລ້າ | 751,77 | ຕື້ກີບ; | 9,01 % |
| • ຊ່ວຍເຫຼືອລ້າຈາກຕ່າງປະເທດເປັນໂຄງການ | 586,77 | ຕື້ກີບ; | 7,03 % |
| • ຊ່ວຍເຫຼືອລ້ານອກໂຄງການຂອງຍີ່ປຸ່ນ | 75 | ຕື້ກີບ; | 0,90 % |
| • ຊ່ວຍເຫຼືອລ້າດັດແກ້ມະຫາພາກ | 90 | ຕື້ກີບ; | 1,08 % |

6.2 ລາຍຈ່າຍງົບປະມານ.

| ລາຍການ | ມູນຄ່າ | | ໂຄງປະກອບ |
|---|---|---|---|
| - ແຜນລາຍຈ່າຍງົບປະມານທັງໝົດ | 10.026,066 | ຕື້ກີບ | 100,00 % |
| ໃນນັ້ນ: | | | |
| 1) ລາຍຈ່າຍເງິນເດືອນ | 2.628,806 | ຕື້ກີບ; | 26,22 % |
| 2) ລາຍຈ່າຍເງິນອຸດໜູນຕ່າງໆ | 751,665 | ຕື້ກີບ; | 7,50 % |
| 3) ລາຍຈ່າຍບໍລິຫານ - ຊື້ໃໝ່ | 1.046,900 | ຕື້ກີບ; | 10,44 % |
| 4) ລາຍຈ່າຍດັດສົມສິ່ງເສີມ | 586 | ຕື້ກີບ; | 5,84 % |

| | | | | |
|---|---|---|---|---|
| 5) ລາຍຈ່າຍເງິນແຮລັດຖະບານ | 50 | ຕື້ກີບ; | 0,50 | % |
| 6) ຄັງສະສົມຂອງລັດຖະບານ | 50 | ຕື້ກີບ; | 0,50 | % |
| 7) ລາຍຈ່າຍເງິນປະກອບສ່ວນ-ບຳລຸງອົງການຈັດຕັ້ງສາກົນ | 29 | ຕື້ກີບ; | 0,29 | % |
| 8) ລາຍຈ່າຍຊຳລະໜີ້ສິນ | 1.553,803 | ຕື້ກີບ; | 15,50 | % |
| ໃນນັ້ນ: | | | | |
| • ຈ່າຍຊຳລະໜີ້ສິນຕ່າງປະເທດ | 783,032 | ຕື້ກີບ; | 7,81 | % |
| • ຈ່າຍຊຳລະໜີ້ສິນພາຍໃນ | 500 | ຕື້ກີບ; | 4,99 | % |
| • ຈ່າຍຊຳລະຕົ້ນທຶນ ແລະ ດອກເບ້ຍພັນທະບັດ | 270,771 | ຕື້ກີບ; | 2,70 | % |
| 9) ລາຍຈ່າຍການລົງທຶນຂອງລັດ | 3.329,892 | ຕື້ກີບ; | 33,21 | % |
| ໃນນັ້ນ: | | | | |
| • ທຶນຊ່ວຍເຫລືອ ແລະ ກູ້ຢືມຈາກຕ່າງປະເທດ | 2.192,066 | ຕື້ກີບ; | 21,86 | % |
| • ຈ່າຍລົງທຶນຂອງລັດພາຍໃນ | 1.137,826 | ຕື້ກີບ; | 11,35 | % |
| ໃນນັ້ນ: | | | | |
| - ຈ່າຍລົງທຶນປົກກະຕິ | 992,826 | ຕື້ກີບ; | 9,90 | % |
| - ຈ່າຍໂຄງການບູລະນະທາງຫລວງແຫ່ງຊາດ | 130 | ຕື້ກີບ; | 1,30 | % |
| - ຈ່າຍໂຄງການກອງທຶນປູກປ່າໄມ້ | 15 | ຕື້ກີບ; | 0,15 | % |

6.3 ແຫລ່ງດຸນດ່ຽງງົບປະມານທັງໝົດ 1.685,30 ຕື້ກີບ.

ໃນນັ້ນ:

- ກູ້ຢືມຈາກຕ່າງປະເທດ 1.605,30 ຕື້ກີບ ເທົ່າກັບ 95,25%
- ພັນທະບັດຄັງເງິນ 80,00 ຕື້ກີບ ເທົ່າກັບ 4,75%

**ມາດຕາ 7:** ກ່ຽວກັບການລົງທຶນຂອງລັດ, ໃຫ້ປະຕິບັດດັ່ງນີ້:

7.1. ການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ ສົກປີ 2008-2009 ຕ້ອງປະຕິບັດຕາມດຳລັດ ເລກທີ 58/ນຍ ຢ່າງເຂັ້ມງວດ; ຫ້າມເດັດຂາດບໍ່ໃຫ້ຂະແໜງການ ແລະ ທ້ອງຖິ່ນ ປະຕິບັດໂຄງການທີ່ບໍ່ນອນໃນແຜນການທີ່ສະພາແຫ່ງຊາດອະນຸມັດ, ເປັນຕົ້ນແມ່ນ ໃຫ້ຢຸດຕິການປະຕິບັດໂຄງການກ່ອນ ແລ້ວຈຶ່ງຂໍ້ນແຜນງົບປະມານຊຳລະຕາມພາຍຫຼັງ. ທຸກອົງການຈັດຕັ້ງ ທີ່ໄດ້ຮັບການເບີກຈ່າຍຈາກງົບປະມານຂອງລັດ ຕ້ອງປະຕິບັດຕາມຮ່ວງລາຍຈ່າຍຂອງແຜນງົບປະມານ ທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວຢ່າງເຄັ່ງຄັດ; ຖ້າມີການຝ່າຝືນ ຈະຕ້ອງໄດ້ປະຕິບັດວິໄນຢ່າງເຂັ້ມງວດ. ລັດຖະບານຈະບໍ່ຮັບຮູ້ໂຄງການລົງທຶນຂອງລັດ ທີ່ບໍ່ໄດ້ປະຕິບັດຕາມດຳລັດເລກທີ 58/ນຍ.

7.2. ການຄິດໄລ່ ແລະ ປະເມີນມູນຄ່າໂຄງການລົງທຶນຂອງລັດ ຕ້ອງອີງໃສ່ຫຼັກວິຊາການຢ່າງຄັກແນ່, ມີການຢັ້ງຢືນຈາກໜ່ວຍງານວິຊາການຂອງລັດ; ໃຫ້ຈຳກັດທຸກຮູບການສວຍໂອກາດທີ່ອ້າງໃສ່ການຊຳລະດ້ວຍເງິນໂອນ ເພື່ອເພີ່ມມູນຄ່າໂຄງການເກີນຄວາມເປັນຈິງ; ຫ້າມທຸກຮູບການປະມູນ, ການຈັດຊື້ ແລະ ການຈັດຈ້າງ ທີ່ປະຕິບັດບໍ່ຖືກຕ້ອງຕາມດຳລັດເລກທີ 03/ນຍ ລົງວັນທີ 09/01/2004 ວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ, ການສ້ອມແປງ ແລະ ການບໍລິການ ດ້ວຍທຶນຂອງລັດ.

7.3. ໃນຂັ້ນຕອນເຈລະຈາ ຮ່າງສັນຍາຮັບເໝົາ ຈັດຊື້-ຈັດຈ້າງ ຂອງໂຄງການລົງທຶນຂອງລັດປະເພດ 1, 2 ແລະ 3 ຕ້ອງໄດ້ໃຫ້ຂະແໜງແຜນການ ແລະ ການລົງທຶນ ແລະ ຂະແໜງການເງິນເຂົ້າຮ່ວມ ຕັ້ງແຕ່ເລີ່ມຕົ້ນ ແລະ ເພື່ອດຸ່ນດ່ຽງ ແລະ ຈັດສັນແຫຼ່ງທຶນຕາມວຽກງານບູລິມະສິດ ແລະ ຄວາມສາມາດຂອງງົບປະມານ; ພ້ອມກັນນັ້ນ, ທຸກໆສັນຍາຈັດຊື້-ຈັດຈ້າງໂຄງການລົງທຶນຂອງລັດ (ປະເພດ 1, 2 ແລະ 3) ຕ້ອງໄດ້ຮັບການເຊັນຢັ້ງຢືນ ຈາກຂະແໜງແຜນການ ແລະ ການລົງທຶນ ຈຶ່ງຖືວ່າໃຊ້ໄດ້.

7.4. ກ່ຽວກັບທຶນ 36 ຕື້ກີບ ສຳລັບໂຄງການຫຼຸດຜ່ອນຄວາມທຸກຍາກຢູ່ກຸ່ມບ້ານ ແມ່ນມອບໃຫ້ຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ເປັນຜູ້ຊີ້ນຳ, ຊຸກຍູ້ ແລະ ຕິດຕາມກວດກາ; ໂຄງການທີ່ມອບໃນຂະຂະແໜງໃດ ແມ່ນມອບໃຫ້ຂະແໜງການນັ້ນຢູ່ທ້ອງຖິ່ນ ເປັນຜູ້ຄຸ້ມຄອງ, ຈັດຕັ້ງປະຕິບັດ ແລະ ສະຫຼູບລາຍງານ ຕາມລະບຽບການ.

7.5. ສຳລັບທຶນກໍ່ສ້າງ ແລະ ປັບປຸງລະບົບຊົນລະປະທານ ຈຳນວນ 25 ຕື້ກີບ ໃຫ້ປະຕິບັດດັ່ງນີ້ : ງົບປະມານຈຳນວນ 22,5 ຕື້ກີບ ແມ່ນມອບໃຫ້ບັນດາແຂວງກ່ຽວຂ້ອງ ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໂຄງການກໍ່ສ້າງລະບົບຊົນລະປະທານ ປະກອບມີ ການກໍ່ສ້າງອ່າງເກັບນ້ຳ, ປະຕູນ້ຳ, ການຕິດຕັ້ງຈັກສູບນ້ຳ , ການຄຸ້ມຄອງໂຄງການ ແລະ ການຝຶກອົບຮົມກຸ່ມຜູ້ນຳໃຊ້ນ້ຳ; ສ່ວນທີ່ເຫລືອຈຳນວນ 2,5 ຕື້ກີບ ແມ່ນ ມອບໃຫ້ ກະຊວງກະສິກຳ-ປ່າໄມ້ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໂຄງການ ຍົກຜະລິດຕະພາບເຂົ້າໃນເຂດ 7 ທົ່ງພຽງ ໃຫຍ່ ແລະ 14 ທົ່ງພຽງນ້ອຍ, ສະໜອງ ແນວພັນ, ວຽກງານສົ່ງເສີມ ແລະ ຄຸ້ມຄອງໂຄງການ ຊົນລະປະທານ. ກະຊວງ ກະສິກຳ-ປ່າໄມ້ ເປັນເຈົ້າການສົມທົບກັບ ຂະແໜງການຂອງຕົນຢູ່ທ້ອງຖິ່ນ ຕິດຕາມຊຸກຍູ້, ກວດກາ, ຢັ້ງຢືນ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດບັນດາໂຄງການດັ່ງກ່າວ.

7.6. ທຸກໆໂຄງການຂອງກະຊວງ-ອົງການລັດຖະບານ ທີ່ກ່ຽວຂ້ອງກັບວຽກງານ ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກທີ່ໄປຈັດຕັ້ງປະຕິບັດ ຢູ່ທ້ອງຖິ່ນ ຕ້ອງໄດ້ແຈ້ງໃຫ້ອຳນາດການປົກຄອງ ທ້ອງຖິ່ນຮັບຮູ້ ແລະ ໃຫ້ເຂົ້າຮ່ວມໃນການຄຸ້ມຄອງໂຄງການ.

7.7. ອຳນາດການປົກຄອງທ້ອງຖິ່ນ ຕ້ອງໄດ້ປຸກລະດົມປະຊາຊົນ ປະກອບສ່ວນດ້ານທຶນຮອນ, ແຮງງານ ແລະ ວັດສະດຸຂອງທ້ອງຖິ່ນ ເຂົ້າໃສ່ໂຄງການລົງທຶນຂອງລັດຕາມສັນຍາ ແລະ ພັນທະ. ໃຫ້ຖືໂຄງການ ທີ່ມີທຶນສົມທົບຂອງປະຊາຊົນນີ້ ເປັນບູລິມະສິດໜຶ່ງສຳລັບການລົງທຶນ.

**ມາດຕາ 8.** ກ່ຽວກັບການແກ້ໄຂໜີ້ສິນໃນສົກປີ 2008-2009, ໃຫ້ປະຕິບັດດັ່ງນີ້:

ອີງໃສ່ແຜນງົບປະມານສົກປີ 2008-2009, ໃຫ້ຄະນະກຳມະການແກ້ໄຂໜີ້ສິນພາຍໃນຂອງລັດຖະບານຂັ້ນສູນກາງ ສືບຕໍ່ເກັບກຳ ແລະ ກວດກາ ຄວາມຖືກຕ້ອງຂອງໜີ້ສິນທັງໝົດໃຫ້ສຳເລັດ ແລະ ແຍກໃຫ້ເຫັນລະອຽດ ອັນໃດແມ່ນໜີ້ໂຄງການລົງທຶນຂອງລັດ, ອັນໃດແມ່ນໜີ້ບໍລິຫານ ຫຼື ໜີ້ອື່ນໆ ເພື່ອຈັດເປັນປະເພດໜີ້ສິນ ແລະ ເປັນບູລິມະສິດໃນການແກ້ໄຂ ແລ້ວນຳສະເໜີຕໍ່ລັດຖະບານ ເພື່ອພິຈາລະນາຕົກລົງ, ໃຫ້ກະຊວງການເງິນ ແລະ ກະຊວງແຜນການ ແລະ ການລົງທຶນ ປະສານສົມທົບກັນ ດຳເນີນການຄົ້ນຄວ້າ ກ່ຽວກັບວິທີການຊຳລະສະສາງໜີ້ສິນ ດ້ວຍຮູບການຕ່າງໆທີ່ເໝາະສົມ ແນໃສ່ແກ້ໄຂໜີ້ສິນພາຍໃນຂອງລັດຖະບານ ໃຫ້ຫລຸດລົງເປັນກ້າວໆ. ໃຫ້ແຕ່ລະຂະແໜງການ ແລະ ທ້ອງຖິ່ນ ຈັດຕັ້ງປະຕິບັດການຊຳລະໜີ້ໂຄງການລົງທຶນຂອງລັດ ຢ່າງເຂັ້ມງວດ ຕາມແຜນການທີ່ສະພາແຫ່ງຊາດອະນຸມັດ.

**ມາດຕາ 9.** ກ່ຽວກັບການຈັດຕັ້ງຜັນຂະຫຍາຍ 11 ແຜນງານໃຫຍ່ຂອງລັດຖະບານ, ໃຫ້ປະຕິບັດດັ່ງນີ້:

9.1. ໃຫ້ແຕ່ລະກະຊວງຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ອີງໃສ່ແຜນຜັນຂະຫຍາຍມະຕິກອງປະຊຸມ ໃຫຍ່ຄັ້ງທີ່ VIII ຂອງພັກ (11 ແຜນງານໃຫຍ່, 111 ໂຄງການຈຸດສຸມຂອງລັດຖະບານ), ແຜນພັດທະນາ 5 ປີ (2006-2010) ແລະ ຍຸດທະສາດການພັດທະນາ ຮອດປີ 2020 ຄົ້ນຄວ້າສ້າງເປັນເອກະສານໂຄງການລະອຽດ ສົ່ງໃຫ້ພາກສ່ວນຮັບຜິດຊອບການປະເມີນຜົນ ເພື່ອດຳເນີນການປະເມີນຄວາມສາມາດເປັນໄປໄດ້ ແລະ ປະສິດທິຜົນຂອງໂຄງການແຕ່ຕົ້ນສົກປີເລີຍ ເພື່ອສະເໜີເຖິງພາກສ່ວນທີ່ຮັບຜິດຊອບການສ້າງ ແລະ ຄຸ້ມຄອງແຜນການ ພິຈາລະນາເອົາເຂົ້າແຜນໃນແຕ່ລະປີ, ໂດຍໃຫ້ປະຕິບັດຕາມຂັ້ນຕອນຂອງດຳລັດ ເລກທີ 58/ນຍ ຢ່າງເຂັ້ມງວດ.

9.2. ໃນການປະຕິບັດແຜນຜັນຂະຫຍາຍມະຕິກອງປະຊຸມໃຫ່ຍຄັ້ງທີ່ VIII ຂອງພັກ ເລີ່ມແຕ່ສົກປີ 2008-2009 ໃຫ້ຂະແໜງການ ແລະ ທ້ອງຖິ່ນ ສຸມໃສ່ 25 ໂຄງການຈຸດສຸມບູລິມະສິດ (ຄັດຈ້ອນຈາກ 111 ໂຄງການຈຸດສຸມ) ທີ່ກຳນົດໃນແຈ້ງການຂອງ ຄະນະເລຂາທິການລັດຖະບານ ສະບັບເລກທີ 791/ຄລບ, ລົງວັນທີ 2/05/2008.

**ມາດຕາ 10.** ກ່ຽວກັບການຮັກສາສະຖຽນລະພາບທາງດ້ານເສດຖະກິດມະຫາພາກ ແລະ ການປະຕິບັດແຜນລາຍຮັບງົບປະມານ, ໃຫ້ປະຕິບັດດັ່ງນີ້: ການເພີ່ມລາຍຮັບຢູ່ຂະແໜງການ ແລະ ທ້ອງຖິ່ນ ຕ້ອງໃຫ້ຕິດພັນກັບການປັບປຸງວຽກງານບໍລິຫານລັດ ຢູ່ຂະແໜງການ ແລະ ທ້ອງຖິ່ນຂອງຕົນ ເປັນຕົ້ນ ການບໍລິການຂອງລັດຕ້ອງສ້າງເງື່ອນໄຂເອື້ອອຳນວຍໃຫ້ແກ່ຫົວໜ່ວຍທຸລະກິດ, ການຜະລິດ ແລະ ການບໍລິການໃຫ້ມີການຂະຫຍາຍຕົວດ້ວຍການສົ່ງເສີມການລົງທຶນ ຈາກພາຍໃນ ແລະ ຕ່າງປະເທດ; ພ້ອມກັນນັ້ນ, ກໍ່ໃຫ້ເອົາໃຈໃສ່ປຸກລະດົມການລົງທຶນ ຈາກພາກສ່ວນເສດຖະກິດຕ່າງໆໃຫ້ແຂງແຮງກວ່າເກົ່າ. ການເພີ່ມລາຍຮັບ ຕ້ອງຕິດພັນກັບການປັບປຸງໂຄງປະກອບເສດຖະກິດຂອງປະເທດຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ ເປັນຕົ້ນ ເອົາໃຈໃສ່ປັບປຸງແຫຼ່ງລາຍຮັບຈາກອຸດສະຫາກຳປຸງແຕ່ງ, ອຸດສະຫາກຳທ່ອງທ່ຽວ, ການເພີ່ມຂື້ນຂອງເສດຖະກິດພູມປັນຍາ. ເອົາໃຈໃສ່ສະກັດກັ້ນການຕົກເຮ່ຍເສຍຫາຍຂອງງົບປະມານ ໃຫ້ຖືເອົາວຽກງານນີ້ ເປັນຄວາມຮັບຜິດຊອບທັງໝົດທຸກຂະແໜງການ, ທ້ອງຖິ່ນ ແລະ ທົ່ວສັງຄົມ.

**ມາດຕາ 11.** ມອບໃຫ້ ຄະນະເລຂາທິການລັດຖະບານ ປະຕິບັດດັ່ງນີ້:

ຮີບຮ້ອນຄົ້ນຄວ້າຮ່າງຄຳສັ່ງ ຂອງນາຍົກລັດຖະມົນຕີ ເພື່ອໃຫ້ກາຍເປັນນິຕິກຳ ໃນການຈັດຕັ້ງປະຕິບັດນະໂຍບາຍປະຢັດຂອງລັດຖະບານໃນລະບົບງົບປະມານຂອງລັດ, ໃນພາກສ່ວນເສດຖະກິດ ແລະ ສັງຄົມທົ່ວໄປ ພ້ອມກັນນັ້ນ ກໍຊ່ວຍລັດຖະບານຕິດຕາມ, ຊຸກຍູ້, ສະຫລຸບສັງລວມ ແລະ ລາຍງານສະພາບການຈັດຕັ້ງປະຕິບັດ.

**ມາດຕາ 12.** ມອບໃຫ້ ກະຊວງແຜນການ ແລະ ການລົງທຶນ ປະຕິບັດດັ່ງນີ້:

12.1. ອອກແຈ້ງການແນະນຳ ໄປຍັງຂະແໜງການ ແລະ ທ້ອງຖິ່ນ ກ່ຽວກັບວິທີການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນການລົງທຶນຂອງລັດ ຕາມການຮັບຮອງຂອງສະພາແຫ່ງຊາດໃນສົກປີ 2008-2009, ເຊິ່ງໃນນັ້ນລວມມີ: ບັນດາຄາດໝາຍທາງດ້ານເສດຖະກິດ ແລະ ສັງຄົມຕ່າງໆ ພ້ອມທັງແຜນການລົງທຶນຂອງລັດ ຈຳນວນ 2.943 ໂຄງການ ລວມເປັນທຶນທັງໝົດ 3.329,89 ຕື້ກີບ; ໃນນັ້ນ, ທຶນພາຍໃນ 1.137,83 ຕື້ກີບ ແລະ ທຶນຕ່າງປະເທດ 2.192,06 ຕື້ກີບ,

ໂດຍໃຫ້ປະຕິບັດຢ່າງເຂັ້ມງວດ ຕາມດຳລັດ ເລກທີ່ 58/ນຍ ວ່າດ້ວຍການຄຸ້ມຄອງການລົງທຶນຂອງລັດ ແລະ ດຳລັດ 135/ນຍ ວ່າດ້ວຍການສ້າງ ແລະ ຄຸ້ມຄອງແຜນພັດທະນາເສດຖະກິດ-ສັງຄົມ.

12.2. ສົມທົບກັບກະຊວງການເງິນ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າກົນໄກປະສານງານ ໃນການຄຸ້ມຄອງການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອ ແລະ ກູ້ຢືມຈາກຕ່າງປະເທດ ແນໃສ່ເຮັດໃຫ້ມີຂໍ້ມູນທີ່ຊັດເຈນ, ຄົບຖ້ວນ ເພື່ອປະເມີນ ແລະ ສະຫລຸບ ຕີລາຄາ ແລ້ວລາຍງານຕໍ່ລັດຖະບານ. ເປັນເຈົ້າການໃນການປັບປຸງດຳລັດວ່າດ້ວຍການຄຸ້ມຄອງການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ໃຫ້ສຳເລັດ ແລະ ສາມາດປະກາດໃຊ້ໄດ້ໃນເວລາອັນຮີບດ່ວນ.

12.3. ສົມທົບກັບກະຊວງການຕ່າງປະເທດ ຈັດຕັ້ງປະຕິບັດແຜນດຳເນີນງານຂອງ "ຖະແຫຼງການວຽງຈັນ ວ່າດ້ວຍປະສິດທິຜົນຂອງການຊ່ວຍເຫລືອ" ເພື່ອລະດົມທຶນຈາກຄູ່ຮ່ວມການພັດທະນາ ເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ VI (2006-2010) ໃຫ້ປະກົດຜົນເປັນຈິງ; ເອົາໃຈໃສ່ປັບປຸງກົນໄກຂະບວນການໂຕະມົນປະຈຳປີ ແລະ ດຳເນີນກອງປະຊຸມໂຕະມົນເພື່ອປຶກສາຫາລື ກັບຄູ່ຮ່ວມການພັດທະນາ ໃນການຈັດຕັ້ງການປະຕິບັດວຽກງານຮ່ວມມືກັບຕ່າງປະເທດໃຫ້ມີປະສິດທິຜົນສູງສຸດ. ເຊີດຊູຄວາມຮັບຜິດຊອບ ຄວາມເປັນເຈົ້າການປະສານສົມທົບ ກັບບັນດາ ຂະແໜງການ ແລະ ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດ, ຄຸ້ມຄອງ ແລະ ນຳໃຊ້ໂຄງການຊ່ວຍເຫຼືອ ແລະ ກູ້ຢືມ.

ມາດຕາ 13. ມອບໃຫ້ກະຊວງການເງິນ ປະຕິບັດ ດັ່ງນີ້ :

13.1. ສືບຕໍ່ດຳເນີນການທັນສະໄໝຂະແໜງການສາຍຕັ້ງໃຫ້ສຳເລັດ ໃນຂອບເຂດທົ່ວປະເທດ, ນຳໃຊ້ລະບົບໄອທີເຂົ້າໃນການຄຸ້ມຄອງການເງິນ; ເປັນເຈົ້າການໃນການປະສານສົມທົບກັບບັນດາຂະແໜງການ ແລະ ທ້ອງຖິ່ນ ຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ສົກປີ 2008-2009 ໃຫ້ໄດ້ຕາມຄາດໝາຍ, ໂດຍສຸມໃສ່ຂຸດຄົ້ນທຸກແຫລ່ງລາຍຮັບ ແລະ ເກັບລາຍຮັບລວມສູນເຂົ້າງົບປະມານແຫ່ງລັດ ເພື່ອຮັບປະກັນໃຫ້ແກ່ລາຍຈ່າຍງົບປະມານ ໄປຕາມແຜນລາຍຈ່າຍ ທີ່ສະພາແຫ່ງຊາດໄດ້ຮັບຮອງ; ສືບຕໍ່ສ້າງ, ປັບປຸງ ແລະ ດັດແກ້ບັນດານິຕິກຳເພື່ອໃຫ້ສອດຄ່ອງກັບລະບຽບກົດໝາຍໃນການຈັດຕັ້ງປະຕິບັດແຕ່ລະໄລຍະ, ເຂັ້ມງວດໃນການປະຕິບັດວິໄນການເງິນ.

13.2. ເອົາໃຈໃສ່ ຄຸ້ມຄອງຮ່ວງລາຍຮັບ ທີ່ລັດຖະບານໄດ້ກຳນົດອອກເປັນລະບຽບ ກົດໝາຍ ໃຫ້ລວມສູນເຂົ້າງົບປະມານແຫ່ງລັດ ຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ ໃນນີ້ ໃຫ້ສຸມໃສ່ : (1) ກຳນົດປະເພດລາຍຮັບທີ່ເປັນຂອງສູນກາງ ແລະ ຂອງທ້ອງຖິ່ນ ໃຫ້ລະອຽດ, ຊັດເຈນຂຶ້ນຕື່ມ ໂດຍອີງຕາມມາດຕາ 37 (ແຫຼ່ງລາຍຮັບທີ່ ເປັນພູດ ຂອງສູນກາງ) ແລະ ມາດຕາ 38 (ແຫລ່ງລາຍຮັບທີ່ເປັນພູດຂອງທ້ອງຖິ່ນ) ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ. ສ່ວນລາຍຮັບພູດແບ່ງປັນ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ( ຕາມມາດຕາ 39) ນັ້ນ ໃຫ້ສືບຕໍ່ປະຕິບັດ ຄືກັນກັບປີຜ່ານມາໄປກ່ອນ. (2) ສົມທົບກັບຫລາຍພາກສ່ວນ, ຫລາຍຂະແໜງການ, ຫລາຍຂັ້ນຄົນ, ຫລາຍແຫລ່ງຂ່າວ ນັບທັງ ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ເພື່ອຊອກຮູ້ ການລະເມີດລະບຽບການ ແລະ ເຊື່ອງອຳລາຍຮັບ ຂອງບັນດາຫົວໜ່ວຍທຸລະກິດ ທີ່ມີຈຸດປະສົງຫລີກລ້ຽງພັນທະຕໍ່ງົບປະມານ, ລາຍຮັບວິຊາການ ຂອງບັນດາອົງການ ແລະ ຂະແໜງການ, ການລະເມີດລະບຽບການນຳເຂົ້າສິນຄ້າແບບບໍ່ຖືກຕ້ອງ. (3) ປັບປຸງຂອດບໍລິການເກັບ ຂອງຂະແໜງການລາຍຮັບ ໃຫ້ກະທັດລັດເບົາບາງ, ວ່ອງໄວ, ຈະແຈ້ງແຕ່ຕ້ອງຮັບປະກັນຄວາມຖືກຕ້ອງ, ຊັດເຈນ ແລະ ໂປ່ງໃສ ເຮັດໃຫ້ຜູ້ທີ່ໄດ້ຮັບການບໍລິການ ມີຄວາມພໍໃຈ

ໃນລະດັບດີ. (4) ເອົາໃຈໃສ່ ປະສານສົມທົບ ກັບອຳນາດການປົກຄອງທ້ອງຖິ່ນ (ແຂວງ, ເມືອງ, ບ້ານ) ປັບປຸງ ຂອດບໍລິການເກັບພາສີທີ່ດິນໃຫ້ມີກົນໄກທີ່ຈະແຈ້ງ ແລະ ສ້າງຂໍ້ມູນສະຖິຕິ ເພື່ອເປັນພື້ນຖານ ໃຫ້ແກ່ການຂະຫຍາຍຕົວທາງດ້ານລາຍຮັບພາສີທີ່ດິນ; ການເກັບພາສີທີ່ດິນ ຕ້ອງໃຫ້ສົມເຫດສົມຜົນ ແລະ ສອດຄ່ອງກັບລັດຖະບັນຍັດ ຂອງປະທານປະເທດ ເລກທີ 01/ ສປປ.(5) ເອົາໃຈໃສ່ ແລະ ມີມາດຕະການເກັບກູ້ໜີ້ຕ້ອງຮັບທີ່ຍັງຕົກຄ້າງໃນຊຸມປີຜ່ານມາ.

13.3. ເອົາໃຈໃສ່ຄຸ້ມຄອງ ແລະ ນຳພາການຈັດຕັ້ງປະຕິບັດ ທຸກຣ່ວງລາຍຈ່າຍ ທີ່ສະພາແຫ່ງຊາດໄດ້ຮັບຮອງ ໃຫ້ຖືກຕ້ອງຕາມແຜນງານ, ໂຄງການ, ແຜນວຽກ, ແຜນເງິນ, ແຜນຄົນ ພ້ອມທັງຈັດແຜນຈ່າຍງົບປະມານ ສົກປີ 2008-2009 ເຂົ້າໃນແຜນວຽກຈຸດສຸມ ໂດຍສຸມໃສ່ : (1) ເພື່ອຮັບປະກັນລາຍຈ່າຍອັນຈຳເປັນຕ່ຳສຸດ ຂອງຊີວິດການເປັນຢູ່ຂອງພະນັກງານ, ລັດຖະກອນ, ທະຫານ, ຕຳຫລວດ; ສະພາແຫ່ງຊາດ ເຫັນດີເພີ້ມເງິນເດືອນຈາກ 2500 ກີບ/ໜຶ່ງດັດສະນີ ມາເປັນ 3000 ກີບ/ ໜຶ່ງດັດສະນີ. ມອບໃຫ້ກະຊວງການເງິນ ຮັບຜິດຊອບຈັດຕັ້ງປະຕິບັດ ຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ ນັບແຕ່ວັນທີ 1/10/2008. (2) ສູ້ຊົນຈັດຕັ້ງປະຕິບັດລາຍຈ່າຍງົບປະມານໃຫ້ໄປຕາມແຜນພັດທະນາເສດຖະກິດ-ສັງຄົມ ທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວນັ້ນ ເພື່ອຮັບປະກັນການກະຕຸ້ນເສດຖະກິດ ແລະ ການຜະລິດສິນຄ້າໃຫ້ມີທ່ວງທ່າດີຂຶ້ນ. (3) ເອົາໃຈໃສ່ຈັດສັນ ແລະ ຊຳລະໜີ້ພາຍໃນ ແລະ ຕ່າງປະເທດ ໃຫ້ເຫມາະສົມ ແລະ ສອດຄ່ອງກັບສະພາບໜີ້ສິນ; ໃນນີ້ ໃຫ້ເອົາໃຈໃສ່ຕື່ມ ການແກ້ໄຂໜີ້ສິນພາຍໃນປະເທດ; (4) ລາຍຈ່າຍເພື່ອສົ່ງເສີມ ການເກັບລາຍຮັບງົບປະມານ ໃຫ້ປະຕິບັດຕາມມາດຕາ 45 ຂອງກົດຫມາຍ ງົບປະມານສະບັບປັບປຸງ.

13.4. ໃນໄລຍະຕົ້ນປີ ທີ່ລາຍຮັບງົບປະມານບໍ່ທັນຮັບປະກັນໃຫ້ແກ່ການປະຕິບັດລາຍຈ່າຍໄດ້ນັ້ນ ໃຫ້ກະຊວງການເງິນມີສິດຢືມເງິນລ່ວງຫນ້າ ຈາກທະນາຄານແຫ່ງລັດ ໃນວົງເງິນບໍ່ໃຫ້ກາຍ ມູນຄ່າຂອງແຜນການລາຍຈ່າຍງວດ I, ເພື່ອຮັບປະກັນລາຍຈ່າຍຮັບໃຊ້ວຽກບໍລິຫານຂອງລັດຖະບານ, ແຕ່ຕ້ອງມີກົນໄກຊຳລະສະສາງຄືນໃຫ້ທະນາຄານເປັນລະບົບ ເພື່ອຮັບປະກັນໃຫ້ແກ່ການຮັກສາສະຖຽນລະພາບ ດ້ານການເງິນແຫ່ງຊາດ ຕາມທີ່ໄດ້ເຄີຍປະຕິບັດມາ.

13.5. ກະຊວງການເງິນ ສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ ຊອກຫາແຫລ່ງທຶນກູ້ຢືມ ແລະ ຊ່ວຍເຫລືອລ້າຈາກຕ່າງປະເທດ ທີ່ບໍ່ມີເງື່ອນໄຂຜູກມັດ, ດອກເບ້ຍຕ່ຳ, ໄລຍະກູ້ຢືມຍາວ ເພື່ອປະຕິບັດ ໂຄງການພັດທະນາ ທີ່ເປັນບູລິມະສິດຂອງລັດຖະບານ.

13.6. ອອກບົດແນະນຳ ຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ສົກປີ 2008- 2009 ໃຫ້ຈະແຈ້ງ ຕາມພາລະບົດບາດ ຄວາມຮັບຜິດຊອບຂອງຕົນ ໂດຍເລີ່ມຈາກການຄຸ້ມຄອງງົບປະມານມະຫາພາກ ໄປສູ່ການຄຸ້ມຄອງງົບປະມານຈຸລະພາກ ແລະ ມີມາດຕະການ ເພື່ອຮັບປະກັນບໍ່ໃຫ້ລາຍຮັບມີການຮົ່ວໄຫລ, ການຈ່າຍເກີນແຜນ ແລະ ຈ່າຍນອກແຜນ.

**ມາດຕາ 14.** ມອບໃຫ້ທະນາຄານແຫ່ງ ສປປ ລາວ ປະຕິບັດ ດັ່ງນີ້ :

14.1. ຄົ້ນຄວ້າເພື່ອວາງນະໂຍບາຍເງິນຕາໃຫ້ສົມຄູ່ກັບການຂະຫຍາຍຕົວຂອງເສດຖະກິດ, ສົມທົບກັບພາກສ່ວນຕ່າງໆຄຸ້ມຄອງອັດຕາເງິນເຟີ້ໃຫ້ຢູ່ໃນລະດັບໜຶ່ງຕົວເລກ, ສືບຕໍ່ດຳເນີນນະໂຍບາຍອັດຕາແລກປ່ຽນ ຕາມກົນໄກຕະຫລາດ ທີ່ມີການຄຸ້ມຄອງຂອງລັດ ແນໃສ່ໃຫ້ອັດຕາແລກປ່ຽນມີຄວາມສະຫງົບ. ກຳນົດອັດຕາດອກເບ້ຍໃຫ້ແທດເໝາະ ເພື່ອຊຸກຍູ້ສົ່ງເສີມການຜະລິດ-ທຸລະກິດຢ່າງແຂງແຮງ. ວາງ ແລະ ເຜີຍແຜ່ລະບຽບການ ເພື່ອຊຸກຍູ້ສົ່ງເສີມການນຳໃຊ້ເງິນກີບໃນການຊຳລະສະສາງພາຍໃນໃຫ້

ຫລາຍຂຶ້ນ; ອອກລະບຽບການ ກ່ຽວກັບການຊຳລະເງິນຕາຕ່າງປະເທດຜ່ານລະບົບທະນາຄານ ແລະ ຄຸ້ມຄອງກະແສໄຫລເຂົ້າ-ອອກ ຂອງເງິນຕາຕ່າງປະເທດຕາມລະບຽບການວາງໄວ້.

14.2. ເອົາໃຈໃສ່ສ້າງເງື່ອນໄຂໃຫ້ຄັງສຳຮອງເງິນຕາຕ່າງປະເທດທາງການເພີ່ມຂຶ້ນ; ຄຸ້ມຄອງ ແລະ ປັບປຸງທະນາຄານທຸລະກິດລັດ ໃຫ້ມີຄວາມສາມາດໃນການບໍລິການຢ່າງມີປະສິດທິພາບ ແລະ ໄດ້ມາດຕະຖານສາກົນເທື່ອລະກ້າວ ເພື່ອສ້າງຄວາມເຊື່ອຖືແກ່ລູກຄ້າ; ເພີ່ມທະວີເອົາໃຈໃສ່ການແກ້ໄຂບັນຫາໜີ້ສິນຄ້າງຄາ ແລະ ໜີ້ບໍ່ເກີດດອກອອກຜົນ ໂດຍໃຫ້ມີມາດຕະການປະຕິບັດທີ່ຊັດເຈນ ແລະ ມີປະສິດທິພາບ; ອຳນວຍຄວາມສະດວກເງິນລ່ວງໜ້າໃຫ້ງົບປະມານ ຕາມມາດຕາ 13 ຂໍ້ 13.4 ຂອງດຳລັດສະບັບນີ້ ໃຫ້ທັນກັບສະພາບຄວາມຕ້ອງການຕົວຈິງ.

14.3. ຊຸກຍູ້ທະນາຄານນະໂຍບາຍ ຢູ່ແຕ່ລະຂັ້ນໃຫ້ສາມາດເຄື່ອນໄຫວປ່ອຍເງິນກູ້ໃຫ້ກຸ່ມເປົ້າໝາຍ ເພື່ອສ້າງທ່າແຮງໃໝ່ໃຫ້ປະຊາຊົນຜູ້ທຸກຍາກໄດ້ເຂົ້າເຖິງແຫຼ່ງທຶນ ເພື່ອນຳໃຊ້ເຂົ້າໃນການຜະລິດແນໃສ່ພັດທະນາຕົນເອງກໍຄືພັດທະນາຊຸມຊົນ, ພ້ອມກັນນັ້ນ ທະນາຄານນະໂຍບາຍຕ້ອງອີງໃສ່ໂຄງການຜະລິດສິນຄ້າ ແລະ ແກ້ໄຂຄວາມທຸກຍາກຂອງທ້ອງຖິ່ນ ເພື່ອປ່ອຍເງິນກູ້ຢ່າງມີຈຸດສຸມ ແລະ ມີປະສິດທິຜົນ.

14.4. ເອົາໃຈໃສ່ຄຸ້ມຄອງ ແລະ ດັດສົມປະລິມານເງິນໃນຂອດຈໍລະຈອນ ຢ່າງຈິດຈໍ່ຕື່ມອີກ, ພ້ອມກັນນັ້ນ ກໍປ່ອຍສິນເຊື່ອໃຫ້ໄດ້ຕາມແຜນທີ່ກຳນົດໄວ້ ເພື່ອຊຸກຍູ້ການຜະລິດເຂົ້າ, ສະບຽງອາຫານ ແລະ ຜະລິດສິນຄ້າອື່ນໆ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດ ໃຫ້ໄດ້ຢ່າງພຽງພໍ, ໃນນີ້ ໃຫ້ເອົາໃຈໃສ່ເປັນພິເສດຕໍ່ການຕິດຕາມກວດກາການປ່ອຍສິນເຊື່ອ ໃຫ້ຖືກຕາມເປົ້າໝາຍ ແລະ ການນຳໃຊ້ສິນເຊື່ອໃຫ້ເກີດດອກອອກຜົນ.

14.5. ສົ່ງເສີມການນຳໃຊ້ເງິນກີບ ໃຫ້ກວ້າງຂວາງກວ່າເກົ່າ, ປັບປຸງລະບົບທະນະຄານທຸລະກິດຂອງລັດ ແລະ ຫຸ້ນສ່ວນ ໃຫ້ມີຄວາມເຂັ້ມແຂງ ດ້ວຍການເພີ່ມທຶນໃຫ້ພຽງພໍ ແລະ ປັບປຸງການດຳເນີນງານໃຫ້ມີຄວາມສາມາດແຂ່ງຂັນສູງ ແລະ ມີຄວາມທັນສະໄໝຍິ່ງຂຶ້ນ; ສົ່ງເສີມການຊຳລະໂດຍບໍ່ໃຊ້ເງິນສົດ, ເປີດກວ້າງການບໍລິການເບີກຈ່າຍເງິນເດືອນຂອງອົງການບໍລິຫານ ແລະ ວິສາຫະກິດຜ່ານບັນຊີ ຢູ່ທະນາຄານ; ຄຸ້ມຄອງກວດກາການເຄື່ອນໄຫວຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ຢ່າງຮັດກຸມ ຕາມລະບຽບກົດໝາຍ.

**ມາດຕາ 15** ມອບໃຫ້ກະຊວງກະສິກຳ-ປ່າໄມ້ ປະຕິບັດດັ່ງນີ້:

15.1. ສົມທົບກັບພາກສ່ວນກ່ຽວຂ້ອງ ຄຸ້ມຄອງ ສ້ອມແປງ, ຟື້ນຟູລະບົບຊົນລະປະທານ (ຄອງເໝືອງ, ຈັກສູບນ້ຳ, ... ທີ່ເປ່ເພ) ເພື່ອຮັບປະກັນການສະໜອງນ້ຳໃຫ້ແກ່ການຜະລິດ ແລະ ວາງແຜນສ້າງຊົນລະປະທານແຫ່ງໃໝ່ຢ່າງມີຈຸດສຸມ; ກະກຽມຮອບດ້ານເພື່ອຕ້ານແລ້ງຕ້ານຖ້ວມ ໂດຍເອົາໃຈໃສ່ຕໍ່ເຂດທີ່ມີຄວາມສ່ຽງ ເພື່ອແກ້ໄຂໃຫ້ທັນການ ແລະ ມີປະສິດທິພາບ; ຮີບຮ້ອນປະຕິບັດໂຄງການຈຸດສຸມ ຂອງລັດຖະບານກ່ຽວກັບການຈັດສັນ ແລະ ພັດທະນາທີ່ດິນກະສິກຳ ແລະ ໂຄງການຍົກຜະລິດຕະພາບເຂົ້າ ຢູ່ 7 ທົ່ງພຽງໃຫຍ່ ແລະ 14 ທົ່ງພຽງນ້ອຍໃຫ້ເປັນຈິງ.

15.2. ສືບຕໍ່ຜັນຂະຫຍາຍຍຸດທະສາດປ່າໄມ້ຮອດປີ 2020 ອອກເປັນໂຄງການ ແລະ ແຜນວຽກລະອຽດ. ສືບຕໍ່ປັບປຸງ ແລະ ຂະຫຍາຍຕາໜ່າງຄຸ້ມຄອງປ່າສະຫງວນແຫ່ງຊາດ 20 ແຫ່ງ, ສຳຫລວດ ແລະ ກຳນົດເຂດປ່າຜະລິດແຫ່ງຊາດ, ເອົາໃຈໃສ່ສຶກສາສຳຫລວດ ແລະ ກຳນົດເຂດປ່າປ້ອງກັນຍອດນ້ຳ ແລະ ສາຂາຍ່ອຍຕ່າງໆ, ສຳຫລວດແບ່ງເຂດດິນປ່າໄມ້ປະເພດຕ່າງໆ, ດຳເນີນການຟື້ນຟູປ່າ ທຳມະຊາດ ໄປຄຽງຄູ່ກັບ ການປຸກລະດົມການປູກໄມ້ເພື່ອເພີ່ມອັດຕາການປົກຫຸ້ມຂອງປ່າໄມ້ໃຫ້ໄດ້ ປະ

ມານ 47% ໃນທ້າຍປີ 2009. ຮີບຮ້ອນຄົ້ນຄ້ວາ ແລະ ກ້າວໄປ ເຖິງການປະກາດໃຊ້ນະໂຍບາຍປິດປ່າທຳມະຊາດ ຢ່າງຖາວອນ.

15.3. ເຂັ້ມງວດກວດກາ ການບຸກລຸກເຂົ້າເຂດປ່າສະຫງວນ ໂດຍນຳໃຊ້ມາດຕະການທາງດ້ານກົດໝາຍຢ່າງເຂັ້ມງວດ; ປະສານສົມທົບກັບພາກສ່ວນກ່ຽວຂ້ອງສືບຕໍ່ປະຕິບັດ ຄຳສັ່ງ ເລກທີ່ 31/ນຍ ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງປ່າໄມ້, ທຸລະກິດໄມ້ ແລະ ສົ່ງເສີມອຸດສະຫະກຳ ປຸງແຕ່ງໄມ້ ແລະ ຜະລິດຕະພັນສຳເລັດຮູບ; ປັບປຸງກວດກາການເຄື່ອນຍ້າຍສັດເຂົ້າ-ອອກ ຕາມຈຸດດ່ານສາກົນຕ່າງໆ.

15.4. ປະສານສົມທົບແໜ້ນກັບຂະແໜງລັງງານ ຈັດຕັ້ງປະຕິບັດນະໂຍບາຍອຸດໜູນລາຄາພະລັງງານ ເພື່ອຮັບໃຊ້ການຜະລິດກະສິກຳ ເປັນຕົ້ນ ເຂົ້າ ແລະ ສະບຽງອາຫານ.

15.5. ຊຸກຍູ້ການຜະລິດກະສິກຳ ໃຫ້ຕິດພັນກັບອຸດສາຫະກຳປຸງແຕ່ງ ໂດຍສຸມໃສ່ການຂະຫຍາຍກຳລັງການ ຜະລິດ ແລະ ປັບປຸງການພົວພັນການຜະລິດໃຫ້ດີຂຶ້ນ; ຕ້ອງສຸມທຶນຮອນເຂົ້າ ໃສ່ວຽກງານ ສົ່ງເສີມດ້ານວິຊາການ ເປັນຕົ້ນ ການຄົ້ນຄວ້າ-ທົດລອງ ແລະ ຜັນຂະຫຍາຍ ຜົນສຳເລັດດັ່ງກ່າວເຂົ້າສູ່ຂະບວນການຜະລິດຕົວຈິງ; ອອກລະບຽບການ ແລະ ແຈ້ງການຕ່າງໆ ເພື່ອຊຸກຍູ້ການຜະລິດໃຫ້ທ່ວງທັນກັບລະດູການ.

15.6. ເອົາໃຈໃສ່ຊີ້ນຳກົມວິຊາການ, ຂະແໜງການຢູ່ທ້ອງຖິ່ນ ໃຫ້ການບໍລິການ ແລະ ຊ່ວຍເຫລືອ ແນະນຳເຕັກນິກວິຊາການດ້ານປູກຝັງ ແລະ ລ້ຽງສັດ ຊ່ວຍຊາວກະສິກອນ ເພື່ອປ້ອງກັນສັດຕູພືດ, ພະຍາດສັດ, ແນະນຳແນວພັນ ແລະ ຍົກສູງສະມັດຕະພາບການຜະລິດ ເປັນຕົ້ນ ແນວພັນເຂົ້າ ແລະ ສັດ.

ມາດຕາ 16. ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ປະຕິບັດດັ່ງນີ້ :

16.1. ເພີ່ມທະວີ ແລະ ສົ່ງເສີມການສົ່ງອອກຢ່າງແຂງແຮງ ດ້ວຍການປັບປຸງການບໍລິການລັດ ໃຫ້ກະທັດຮັດ, ປັບປຸງບັນດານິຕິກຳທີ່ພົວພັນ ກັບການນຳເຂົ້າ ແລະ ສົ່ງອອກ ລວມທັງຂໍ້ກຳນົດຕ່າງໆ ກ່ຽວກັບການຄ້າຊາຍແດນ, ຜ່ານແດນ ແລະ ຂາອອກຕໍ່ໃຫ້ຄ່ອງຕົວ. ສືບຕໍ່ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້ານະໂຍບາຍ, ກົດໝາຍ, ລະບຽບການຕ່າງໆ ເພື່ອພັດທະນາ ແລະ ຄຸ້ມຄອງເຂດເສດຖະກິດພິເສດ, ເຂດອຸດສາຫະກຳ, ເຂດການຄ້າເສລີ ແລະ ການບໍລິການຜ່ານ ທີ່ລັດຖະບານໄດ້ຕົກລົງແລ້ວໃຫ້ສຳເລັດໂດຍໄວ.

16.2. ສຸມໃສ່ສົ່ງເສີມການຜະລິດສິນຄ້າ ແລະ ການບໍລິການໃຫ້ຫລາກຫລາຍ, ທັງປະລິມານ ແລະ ຄຸນນະພາບ, ນອກນັ້ນ ເອົາໃຈໃສ່ປະຕິບັດ ສັນຍາ ແລະ ພັນທະຕ່າງໆກັບສາກົນ ປັບປຸງຄວາມພ້ອມໃນການເຂົ້າຮ່ວມໃນເຂດການຄ້າເສລີອາຊຽນ (AFTA) ແລະ ອົງການການຄ້າໂລກ (WTO).

16.3. ຄົ້ນຄວ້າເພື່ອວາງນະໂຍບາຍ ແລະກົນໄກໃນການສົ່ງເສີມ ແລະ ເພີ່ມມູນຄ່າການສົ່ງອອກ ກັບ ບັນດາປະເທດຄູ່ຄ້າ, ປະເທດໃນກຸ່ມອາຊຽນ, ສະຫະພາບເອີຣົບ ແລະ ສຸມໃສ່ການຂະຫຍາຍຕະຫລາດການສົ່ງອອກໃຫ້ກວ້າງອອກສູ່ສາກົນ, ຄົ້ນຄວ້າສິນຄ້າໃໝ່ທີ່ມີທ່າແຮງບົ່ມຊ້ອນຂອງຊາດ

16.4. ສ້າງເງື່ອນໄຂ ເພື່ອຊຸກຍູ້ການປະຕິບັດຍຸດທະສາດຫັນເປັນອຸດສາຫະກຳ ແລະ ເປັນທັນສະໄໝໃຫ້ເປັນຮູບປະທຳເທື່ອລະກ້າວ; ສືບຕໍ່ຄົ້ນຄວ້າສ້າງໂຄງການບູລິມະສິດຜະລິດສິນຄ້າ ຫຼື ການບໍລິການທີ່ເປັນປາຍແຫຼມ.

16.5. ເອົາໃຈໃສ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ແຜນແມ່ບົດພັດທະນາວິສະຫາກິດຂະໜາດນ້ອຍ ແລະ ກາງ, ດຳລັດ ເລກທີ 42/ນຍ ວ່າດ້ວຍການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ຢູ່ ສປປ ລາວ ເພື່ອຊຸກຍູ້ການຜະລິດໃຫ້ກວ້າງຂວາງ, ສາມາດຕອບສະໜອງສິນຄ້າໃຫ້ແກ່ຕະຫຼາດພາຍໃນ ແລະ ເພື່ອສົ່ງອອກ, ສ້າງວຽກເຮັດງານທຳໃຫ້ແກ່ແຮງງານໃຫ້ໄດ້ຫລາຍຂຶ້ນ ໂດຍສົ່ງເສີມໃຫ້ທຸກພາກສ່ວນເສດຖະກິດເຂົ້າຮ່ວມຢ່າງຕັ້ງໜ້າ.

16.6. ເພີ່ມທະວີປະຕິບັດພາລະບົດບາດຄຸ້ມຄອງ-ດັດສົມຕະຫຼາດ; ຕິດຕາມຢ່າງໃກ້ສິດສະພາບການເໜັງຕີງຂອງລາຄາສິນຄ້າ, ສະພາບການສະໜອງ ແລະ ຄວາມຕ້ອງການສິນຄ້າອຸປະໂພກບໍລິໂພກ ໂດຍສະເພາະແມ່ນເຂົ້າ ແລະ ສະບຽງອາຫານ; ໃຫ້ດຳເນີນມາດຕະການແຊກແຊງໃນເມື່ອຈຳເປັນ ເພື່ອໃຫ້ລາຄາມີຄວາມສະຖຽນສົມເຫດສົມຜົນ, ສະກັດກັ້ນການກັກຕູນ ເພື່ອສວຍໂອກາດຂຶ້ນລາຄາຕາມລຳພັງໃຈ; ຮີບຮ້ອນປັບປຸງລັດວິສາຫະກິດສະບຽງອາຫານ ໃຫ້ມີຄວາມເຂັ້ມແຂງຕິດພັນກັບການປັບປຸງກຸ່ມເກັບຊື້ ແລະ ກຸ່ມສະໜອງປັດໃຈຮັບໃຊ້ການຜະລິດ; ສ້າງຄັງແຮເຂົ້າຂອງລັດ ເພື່ອຮັບປະກັນຄວາມປອດໄພດ້ານອາຫານຢ່າງໜັກແໜ້ນ ແລະ ເພື່ອເປັນເຄື່ອງມືທີ່ມີປະສິດທິພາບ ໃນການແຊກແຊງຕະຫຼາດ; ຄຸ້ມຄອງລາຄານ້ຳມັນເຊື້ອໄຟ ຕາມກົນໄກຂອງລັດຖະບານຢ່າງຄ່ອງຕົວ, ຮັບປະກັນການສະໜອງແກ່ສັງຄົມ ເປັນປົກກະຕິ (ບໍ່ໃຫ້ເກີດ ສະພາບຂາດແຄນ) ແລະ ບໍ່ໃຫ້ເກີດການເກືອກູນ; ກຳຈັດການສ່ວຍໂອກາດລັກໂລບ ແລະ ກັກຕູນ ເພື່ອໂກງກຳໄລ.

ມາດຕາ 17. ມອບໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ປະຕິບັດດັ່ງນີ້:

17.1. ສືບຕໍ່ຊຸກຍູ້ບັນດາໂຄງການກໍ່ສ້າງເຂື່ອນ ທີ່ຍັງບໍ່ທັນສຳເລັດ ການເຈລະຈາ ແລະ ເຊັນສັນຍາຕ່າງໆ ເພື່ອໃຫ້ໄດ້ລົງມືປະຕິບັດເປັນຕົ້ນ ໂຄງການນ້ຳງື່ມ 3, ນ້ຳເທີນ 1, ນ້ຳທຽບ 1, ສືບຕໍ່ກວດກາບັນດາກິດຈະການຂຸດຄົ້ນ, ສຳຫລວດ ແລະ ຂຸດຄົ້ນປຸງແຕ່ງແຮ່ທາດຕ່າງໆ ທີ່ລັດຖະບານໄດ້ອະນຸຍາດຜ່ານມາ, ຕິດຕາມຄຸ້ມຄອງຢ່າງໃກ້ສິດ ແລະ ຊຸກຍູ້ໃຫ້ດຳເນີນການຖືກຕ້ອງຕາມລະບຽບກົດໝາຍ ແລະ ປະຕິບັດຕາມສັນຍາ ທີ່ໄດ້ເຊັນກັບລັດຖະບານ; ຊຸກຍູ້ ການຂຸດຄົ້ນແຮ່ທາດໃຫ້ໄດ້ຕາມແຜນ ແລະ ໃຫ້ມີການປຸງແຕ່ງແຮ່ທາດຕາມຄວາມສາມາດຕົວຈິງ; ສືບຕໍ່ປັບປຸງພື້ນຖານນິຕິກຳ ເປັນຕົ້ນ: ກົດໝາຍບໍ່ແຮ່ ແລະ ດຳລັດການສົ່ງອອກແຮ່ທາດ; ອອກລະບຽບການ ແລະ ມາດຕະການທີ່ຮັດກຸມ ເພື່ອເປັນບ່ອນອີງໃນການຄຸ້ມຄອງຕິດຕາມກວດກາກິດຈະການບໍ່ແຮ່ ໃຫ້ເຄື່ອນໄຫວຢ່າງມີປະສິດທິຜົນ.

17.2. ຮີບຮ້ອນດຳເນີນໂຄງການຜະລິດ ແລະ ນຳໃຊ້ພະລັງງານທົດແທນນ້ຳມັນ, ປະຕິບັດນະໂຍບາຍປະຢັດໄຟຟ້າ ແລະ ຫຼຸດຜ່ອນໄຟຟ້າຕົກເຮ່ຍ; ກວດກາ ແລະ ສ້ອມແປງສະຖານີໄຟຟ້າຮັບໃຊ້ຊົນລະປະທານຢູ່ທຸກໆບ່ອນ. ປະສານສົມທົບແໜ້ນກັບກະຊວງກະສິກຳ-ປ່າໄມ້ ປະຕິບັດນະໂຍບາຍອຸດໜູນລາຄາພະລັງງານໄຟຟ້າ ສຳລັບຊົນລະປະທານ ເພື່ອຮັບໃຊ້ການຜະລິດ ກະສິກຳ ເປັນຕົ້ນແມ່ນ ເຂົ້າ ແລະ ສະບຽງອາຫານ.

ມາດຕາ 18. ມອບໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ປະຕິບັດດັ່ງນີ້:

18.1. ສືບຕໍ່ຄົ້ນຄວ້າຮ່າງດຳລັດ ກ່ຽວກັບກຳນົດໝາຍ ມາດຖານລາຄາຫົວໜ່ວຍການກໍ່ສ້າງ ແລະ ສ້ອມແປງຕ່າງໆ ໃຫ້ສຳເລັດໂດຍໄວ ເພື່ອເປັນບ່ອນອີງ ໃຫ້ແກ່ການກຳນົດລາຄາກາງໃນການປະກວດ ລາຄາເພື່ອວ່າຈ້າງ ກໍຄືການວາງແຜນ, ຄຸ້ມຄອງ, ກວດກາ ແລະ ປະເມີນຜົນໂຄງການ ແລະ ກິດຈະການລົງທຶນຕ່າງໆຢ່າງເປັນລະບົບ; ພ້ອມດຽວກັນນັ້ນ ກໍສົມທົບກັບ ກະຊວງ, ອົງການຕ່າງໆ ອອກລະບຽບການທີ່ເປັນມາດຖານ ໃຫ້ບູລິມະສິດວຽກງານກໍ່ສ້າງແກ່ບໍລິສັດພາຍໃນຂອງລາວ.

18.2. ສືບຕໍ່ຕິດຕາມຊຸກຍູ້ບັນດາໂຄງການທີ່ພວມຈັດຕັ້ງປະຕິບັດໃຫ້ສຳເລັດ ເຊັ່ນ: ໂຄງການກໍ່ສ້າງທາງໄປສະໜາມກິລາຊີເກມ; ໂຄງການກໍ່ສ້າງຂົວ - ທາງແຫ່ງຕ່າງໆໃຫ້ສຳເລັດ. ສືບຕໍ່ປັບປຸງການວາງແຜນຜັງເມືອງ ແລະ ການຄຸ້ມຄອງຜັງເມືອງ ໃຫ້ມີຄວາມເປັນລະບຽບ ມີຄວາມສະຫງົບ ແລະ ສະອາດງາມຕາ ເພື່ອຕ້ອນຮັບການເປັນເຈົ້າພາບຈັດງານແຂ່ງຂັນກິລາຊີເກມ ແລະ ສືບຕໍ່ໃຫ້ຮັບປະກັນວຽກງານສ້ອມທາງ ໃຫ້ເປັນປົກກະຕິ ແລະ ວ່ອງໄວ.

18.3. ສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ ເພື່ອຫັນແລວເສດຖະກິດຕາເວັນອອກ-ຕາເວັນຕົກ, ເໜືອ-ໃຕ້ ໃຫ້ເປັນທາງເຊື່ອມໂຍງເສດຖະກິດຂອງຂົງເຂດ ແລະ ອະນຸພາກພື້ນ ຕິດພັນກັບການປັບປຸງອຸດສະຫາກຳການທ່ອງທ່ຽວ ແລະ ອຸດສາຫະກຳປຸງແຕ່ງ ດ້ວຍການສົ່ງເສີມນັກລົງທຶນ ທີ່ສົນໃຈປະກອບກິດຈະການ ໂດຍສະເພາະແມ່ນຂະແໜງອຸດສາຫະກຳຂະໜາດນ້ອຍ ແລະ ຂະໜາດກາງ (SME) ໃຫ້ຫຼາຍຂຶ້ນ; ເອົາໃຈໃສ່ປັບປຸງເສັ້ນທາງໃຫ້ໄດ້ມາດຖານສາກົນ ເພື່ອຮອງຮັບການຂົນສົ່ງສິນຄ້າ ການບໍລິການ, ການລົງທຶນ, ການທ່ອງທ່ຽວ ແລະ ອື່ນໆ; ນອກຈາກນັ້ນ, ຕ້ອງໄດ້ເອົາໃຈໃສ່ການປົກປັກຮັກສາສິ່ງແວດລ້ອມໃນບໍລິເວນແລວທາງຜ່ານ ເປັນຕົ້ນ ຕ້ອງໄດ້ກຳນົດເຂດສະຫງວນເພື່ອປູກໄມ້ ຕ້ານການເຊາະເຈື່ອນຕາມແລວທາງຜ່ານ.

**ມາດຕາ 19.** ມອບໃຫ້ອົງການທ່ອງທ່ຽວແຫ່ງຊາດປະຕິບັດດັ່ງນີ້:

ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສ້າງໂຄງການປັບປຸງການບໍລິການທ່ອງທ່ຽວໃຫ້ໄດ້ມາດຕະຖານເພື່ອດຶງດູດນັກທ່ອງທ່ຽວເພີ່ມຂຶ້ນ ແນ່ໃສ່ຍົກສູງລາຍຮັບງົບປະມານ, ສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນ ແລະ ທັງເປັນການເຮັດຂາອອກກັບທີ່ ຢູ່ແຕ່ລະທ້ອງຖິ່ນ; ປະຕິບັດການອອກວິຊາກັບດ່ານ ໃຫ້ກວ້າງກວ່າເກົ່າ ພ້ອມທັງເອົາໃຈໃສ່ສ້າງ ແຜນພັດທະນາ ການທ່ອງທ່ຽວໂດຍເນັ້ນ ໃສ່ການທ່ອງທ່ຽວ ທາງທຳມະຊາດ; ທາງປະຫວັດສາດ ແລະ ວັດທະນະທຳ. ເອົາໃຈໃສ່ກໍ່ສ້າງໂຄງລ່າງພື້ນຖານທ່ອງທ່ຽວໃຫ້ຫລາຍຂຶ້ນ, ສ້າງພື້ນຖານໂຄງລ່າງສູນຝຶກອົບຮົມ ການບໍລິການ ແລະ ການທ່ອງທ່ຽວ (ການນຳທ່ຽວ, ໂຮງແຮມ, ການປຸງແຕ່ງອາຫານ ແລະ ອື່ນໆ) ປຸກລະດົມໃຫ້ ທຸກພາກສ່ວນເອົາໃຈໃສ່ ວຽກງານການທ່ອງທ່ຽວ ເຮັດໃຫ້ຂະແໜງນີ້ປະກອບສ່ວນ ຢ່າງຕັ້ງໜ້າໃຫ້ແກ່ການ ເຕີບໂຕຂອງເສດຖະກິດ ແລະ ການສ້າງລາຍໄດ້ໃຫ້ປະຊາຊົນຢູ່ໃນທ້ອງຖິ່ນ. ຮີບຮ້ອນສ້າງແຜນຍຸດທະສາດການພັດທະນາການທ່ອງທ່ຽວໃຫ້ສຳເລັດ. ສືບຕໍ່ປັບປຸງ ລະບຽບການຕ່າງໆ ແລະ ປັບປຸງຂໍ້ຕົກລົງວ່າ ດ້ວຍການສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດທ່ອງທ່ຽວໃຫ້ສຳເລັດ ແລະ ປະກາດໃຊ້ຢ່າງເປັນທາງການ.

**ມາດຕາ 20.** ມອບໃຫ້ກະຊວງສຶກສາທິການປະຕິບັດດັ່ງນີ້:

ສູ້ຊົນປະຕິບັດການສຶກສາພາກບັງຄັບໃຫ້ໄດ້ຄື ອັດຕາການເຂົ້າຮຽນຊັ້ນປະຖົມໃຫ້ໄດ້ 91% ແລະ ອັດຕາສອບເສັງຈົບຊັ້ນປະຖົມໃຫ້ໄດ້ 97%. ສູ້ຊົນເຮັດໃຫ້ອັດຕາການເຂົ້າຮຽນລວມຊັ້ນມັດທະຍົມຕອນ ຕົ້ນໃຫ້ໄດ້ 68%, ມັດທະຍົມຕອນປາຍໃຫ້ໄດ້ 40%, ເພີ່ມອັດຕາການຮູ້ໜັງສືຂອງຜູ້ໃຫຍ່ອາຍຸ 15 ປີ ຂຶ້ນໄປໃຫ້ໄດ້ 78%, ສູ້ຊົນຮັບນັກສຶກສາເຂົ້າຮຽນໃໝ່ໃນສາຍອາຊີວະສຶກສາ ແລະ ສາຍການສຶກສາຊັ້ນສູງໃຫ້ໄດ້ 19.200 ຄົນ ແລະ ພາກພິເສດໃຫ້ໄດ້ 9.700 ຄົນ. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງ ຖິ່ນເປັນເຈົ້າການສືບຕໍ່ຄົ້ນຄວ້າສ້າງແຜນແມ່ບົດວຽກງານພັດທະນາຊັບພະຍາກອນມະນຸດ ໃຫ້ເປັນອັນລະອຽດເພື່ອຮອງຮັບເອົາການພັດທະນາໃນອານາຄົດ, ຄຽງຄູ່ກັນນັ້ນ ກະຊວງສຶກສາທິການ ຕ້ອງໄດ້ສືບຕໍ່ປະຕິຮູບລະບົບການສຶກສາແຫ່ງຊາດໃຫ້

ເຂົ້າສູ່ລວງເລິກ ທາງດ້ານປະລິມານ ແລະ ຄຸນນະພາບ, ເປັນຕົ້ນແມ່ນການປະຕິຮູບຫຼັກສູດການຮຽນ-ການສອນ ໃຫ້ໜັບໃກ້ກັບລະດັບສາກົນເທື່ອລະກ້າວ, ໂດຍເນັ້ນໃສ່ການກໍ່ສ້າງ ແລະບໍາລຸງຍົກລະດັບວິຊາສະເພາະໃຫ້ແກ່ຄູ່ມແຖວຄູ-ອາຈານ, ປຸກລະດົມພາກສ່ວນ ທຸລະກິດເອກະຊົນ ໃຫ້ເຂົ້າຮ່ວມ ຢ່າງຕັ້ງໜ້າ ໃນການພັດທະນາ ວຽກງານອາຊີວະສຶກສາໃຫ້ມີບາດກ້າວກະໂດດຂັ້ນອັນໃໝ່ ສາມາດຮັບປະກັນໄດ້ຄຸນນະພາບໃນລະດັບອັນແນ່ນອນ; ພ້ອມກັນນັ້ນ ກໍ່ສືບຕໍ່ກໍ່ສ້າງ ແລະ ຂະຫຍາຍພື້ນຖານໂຄງລ່າງທີ່ຈໍາເປັນ ເພື່ອສ້າງເງື່ອນໄຂ ເອື້ອອໍານວຍໃຫ້ແກ່ວຽກງານການສຶກສາ; ເອົາໃຈໃສ່ການສຶກສານອກລະບົບເພື່ອລຶບລ້າງຄວາມບໍ່ຮູ້ໜັງສືແກ່ກຸ່ມເປົ້າໝາຍ, ປະຕິບັດນະໂຍບາຍຍົກຖານະບົດບາດຂອງຄູອາຈານໃຫ້ມີລັກສະນະຊັດເຈນຂຶ້ນກ່ວາເກົ່າໃນສັງຄົມ, ພ້ອມດຽວກັນນັ້ນ ກໍປະຕິບັດນະໂຍບາຍອຸດໜູນຄູ-ອາຈານ ທີ່ປະຕິບັດໜ້າທີ່ຢູ່ເຂດທຸລະກັນດານຫ່າງໄກສອກຫລີກ.

ມາດຕາ 21. ມອບໃຫ້ກະຊວງສາທາລະນະສຸກປະຕິບັດດັ່ງນີ້:

ສູ້ຊົນສັກຢາກັນພະຍາດເດັກນ້ອຍໃຫ້ໄດ້ 80% ຂອງຈໍານວນເດັກນ້ອຍທົ່ວປະເທດ, ສະໜອງນໍ້າສະອາດ ໃຫ້ແກ່ປະຊາຊົນໃຫ້ໄດ້ 76% ຂອງຄົວເຮືອນທົ່ວປະເທດ, ສະໜອງມຸ້ງຍ້ອມຢາ150 ພັນດາງ ໃຫ້ປະຊາຊົນໃນເຂດສ່ຽງຕໍ່ການເປັນໄຂ້ຍຸງ ແລະ ເຮັດໃຫ້ອັດຕາ ການເປັນໄຂ້ຍຸງຕໍ່າກວ່າ 2,9 ຕໍ່ປະຊາຊົນ 1.000 ຄົນ. ເອົາໃຈໃສ່ຊຸກຍູ້ ແລະ ປຸກລະດົມຂະບວນການວຽກງານ ແມ່ ແລະ ເດັກ ແລະ ໂພສະນາການ ເພື່ອຫຼຸດຜ່ອນການຕາຍຂອງແມ່ ແລະ ເດັກ, ການຂາດສານອາຫານ; ຫັນເອົາວຽກງານສາທາລະນະສຸກ ລົງສູ່ຮາກຖານຫຼາຍຂຶ້ນ ເຊິ່ງເລີ່ມຈາກການສ້າງບ້ານແບບຢ່າງ ສາທາລະນະສຸກ ແລະ ເຮັດໃຫ້ການເຄື່ອນໄຫວຂອງບັນດາໂຮງໝໍ, ໂຮງຮຽນ, ສູນ, ສະຖາບັນ, ໂຄງການ ແລະ ມະຫາວິທະຍາໄລ ມີການເຊື່ອມສານກົມກຽວກັນ ເພື່ອສ້າງໃຫ້ໄດ້ພະນັກງານທີ່ມີ ຈັນຍາທໍາ, ທ່າທີຮັບໃຊ້ ແລະ ຄວາມຊໍານານງານທີ່ຈະລົງໄປປະຈໍາຢູ່ໂຮງໝໍພາກ, ແຂວງ, ເມືອງ, ສຸກສາລາ ແລະ ກຸ່ມບ້ານຕ່າງໆ. ສືບຕໍ່ປະຕິບັດ ການປິ່ນປົວປະເພດເສຍຄ່າ ແລະ ບໍ່ເສັຍຄ່າໃຫ້ສອດຄ່ອງກັບສະພາບຕົວຈິງ; ຮັບປະກັນການຄຸ້ມຄອງວິໄຈ, ກວດກາອາຫານ ແລະ ຢາ ເພື່ອປົກປ້ອງ ສຸຂະພາບຂອງຜູ້ບໍລິໂພກ;ເອົາໃຈໃສ່ຕິດຕາມຄຸ້ມຄອງ ແລະ ຊຸກຍູ້ສົ່ງເສີມພາກເອກະຊົນ ໃຫ້ມີບົດບາດປະກອບສ່ວນໃນວຽກງານປິ່ນປົວ ແລະ ຮັກສາ ສຸຂະພາບ ຂອງປະຊາຊົນ.

ມາດຕາ 22. ມອບໃຫ້ຄະນະຊີ້ນໍາພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກແຫ່ງຊາດ ປະຕິບັດດັ່ງນີ້:

22.1. ເພີ່ມທະວີບົດບາດປະສານງານ ລະຫວ່າງ ບັນດາຂະແໜງການ-ອົງການຂັ້ນສູນກາງກັບທ້ອງຖິ່ນ ໃນການຈັດຕັ້ງປະຕິບັດ ບັນດາໂຄງການ ແລະ ກິດຈະການຕ່າງໆ ເພື່ອແກ້ໄຂຄວາມທຸກຍາກ ພ້ອມນັ້ນກໍເຮັດ ພາລະບົດບາດມະຫາພາກ ໃນການຕິດຕາມ, ຊຸກຍູ້, ກວດກາການຈັດຕັ້ງປະຕິບັດໂຄງການ ແລະ ສະຫລຸບສັງລວມບັນຫາຕ່າງໆ ເພື່ອລາຍງານລັດຖະບານ ພິຈາລະນາແກ້ໄຂໃຫ້ທັນການ.

22.2. ຄົ້ນຄວ້າປັບປຸງກົນໄກການປະສານງານ ລະຫວ່າງຂະແໜງການຂັ້ນສູນກາງດ້ວຍກັນ ແລະ ລະຫວ່າງສູນກາງ ກັບທ້ອງຖິ່ນ, ອອກລະບຽບການ ແລະ ກົນໄກຄຸ້ມຄອງ ນໍາໃຊ້ທຶນຈາກແຫຼ່ງຕ່າງໆ ເຂົ້າໃນໂຄງການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໂດຍສະເພາະເຂົ້າສູ່ການປະຕິບັດໂຄງການຈຸດສຸມ ຂອງ ກຸ່ມບ້ານພັດທະນາ ຢູ່ບັນດາເມືອງທຸກຍາກໃຫ້ສໍາເລັດໂດຍໄວ. ພ້ອມດຽວກັນນັ້ນກໍ່ຊຸກຍູ້ຂະແໜງການ ແລະ ທ້ອງຖິ່ນປະຕິບັດລະບອບການລາຍງານວຽກງານດັ່ງກ່າວຢ່າງປົກກະຕິ ຄຽງຄູ່ກັບການປັບປຸງຖານຂໍ້ມູນໃຫ້ຄົບຖ້ວນສົມບູນເພື່ອນໍາໃຊ້ໃນວຽກງານ ການສ້າງແຜນການ, ແຜນງານ ແລະ ໂຄງການ ໃນແຕ່ລະໄລຍະ.

22.3. ຮັບຮ້ອນສົມທົບກັບກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງທີ່ກ່ຽວຂ້ອງ ຄົ້ນຄວ້າກຳນົດມາດຕະຖານຄວາມທຸກຍາກຢູ່ປະເທດເຮົາຄືນໃໝ່ ແລ້ວນຳສະເໜີລັດຖະບານ ພິຈະລະນາຮັບຮອງເອົາ.

22.4. ປະສານກັບຂະແໜງການ ແລະ ທ້ອງຖິ່ນ ຕິດຕາມການຈັດຕັ້ງປະຕິບັດໂຄງການຫຼຸດຜ່ອນຄວາມທຸກຍາກຢູ່ກຸ່ມບ້ານຕ່າງໆ ທີ່ນຳໃຊ້ເງິນບ້ວງ 36 ຕື້ກີບ ທີ່ລັດຖະບານໄດ້ຈັດສັນໃຫ້ໃນສົກປີນີ້, ເພື່ອສັງລວມບັນຫາ ທັງດ້ານດີ ແລະ ດ້ານອ່ອນ, ຖອດຖອນບົດຮຽນ ແລະ ຜັນຂະຫຍາຍໃນສົກປີຕໍ່ໄປ.

ມາດຕາ 23. ມອບໃຫ້ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ປະຕິບັດດັ່ງນີ້:

ຄົ້ນຄວ້າປັບປຸງເນື້ອໃນສື່ໂຄສະນາ ໃຫ້ດີຂຶ້ນ ດວ້ຍຫຼາຍຮູບຫຼາຍສີ, ວ່ອງໄວທັນການ, ເປັນສື່ໃນການໃຫ້ຄວາມຮູ້ຄວາມເຂົ້າໃຈ ທັງມີລັກສະນະສຶກສາອົບຮົມ ໄປຕາມແນວທາງນະໂຍບາຍຂອງພັກ, ໃຫ້ຄວາມຮູ້ ແລະ ສາລະຫຼາຍດ້ານ ເຊັ່ນ: ດ້ານລະບຽບກົດໝາຍ, ວິທະຍາສາດ ແລະ ວິຊາການຕ່າງໆ; ສົ່ງເສີມສິລະປະວັດທະນະທຳທີ່ມີມູນເຊື້ອອັນດີງາມຂອງຊາດ; ເອົາໃຈໃສ່ໂຄສະນາສົ່ງເສີມການຜະລິດສິນຄ້າໃຫ້ເປັນຂະບວນກວ້າງຂວາງ; ໂຄສະນາ ໃຫ້ນັກທ່ອງທ່ຽວເຂົ້າມາທ່ອງທ່ຽວໃນປະເທດ; ນອກຈາກນັ້ນ, ເອົາໃຈໃສ່ສ້າງບ້ານ ແລະ ຄອບຄົວ ວັດທະນະທຳໃຫ້ຫຼາຍຂຶ້ນ. ບັນດານັກຂ່າວ, ນັກສື່ມວນຊົນ ຄວນເພີ່ມຄວາມຄົມແຫຼມຂອງປາຍປາກກາ ໃນການຕິຕິວິຈານປະກົດການຫຍໍ້ທໍ້ ແລະ ການຟູມເຟືອຍຕ່າງໆ ດ້ວຍທ່າທີອັນສ້າງສັນ ກົງໄປກົງມາກວ່າເກົ່າ; ພ້ອມກັນນັ້ນ ກໍ່ປຸກສ້າງ ແນວຄິດ ແລະ ຄວາມເຄີຍຊິນປະຢັດ ໃຫ້ເກີດຂຶ້ນ ຢ່າງແຜ່ຫຼາຍໃນສັງຄົມ.

ມາດຕາ 24. ມອບໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມປະຕິບັດດັ່ງນີ້

ເອົາໃຈໃສ່ຈັດຕັ້ງເຜີຍແຜ່ບັນດາກົດໝາຍ ແລະ ນິຕິກຳຕ່າງໆ ທີ່ກ່ຽວຂ້ອງກັບຂະແໜງແຮງງານໃຫ້ສັງຄົມຮັບຮູ້ຢ່າງກວ້າງຂວາງ; ສົ່ງເສີມການຝຶກວິຊາຊີບ ແລະ ສະໜອງແຮງງານ ໃຫ້ໄປຕາມໂຄງປະກອບເສດຖະກິດ; ຄົ້ນຄວ້າ ແລະ ປະກາດໃຊ້ລະບຽບການຄຸ້ມຄອງແຮງງານຕ່າງດ້າວທີ່ເຮັດວຽກ ໃນ ສປປ ລາວ ພ້ອມທັງປະຕິບັດ ໃຫ້ເຂັ້ມງວດ; ສືບຕໍ່ແກ້ໄຂບັນຫາຄົນລາວທີ່ອອກໄປເຮັດວຽກຢູ່ ຕ່າງປະເທດໃຫ້ຖືກຕ້ອງ; ເອົາໃຈໃສ່ ຄົ້ນຄວ້າປະຕິບັດນະໂຍບາຍ ຕໍ່ຜູ້ທີ່ມີຜົນງານຕໍ່ການປະຕິວັດ, ຜູ້ອອກກິນເບັ້ຍບຳນານໃຫ້ດີ ແລະ ຖືກຕ້ອງທ່ຽງທຳ; ຄົ້ນຄວ້າ ແລະ ວິໄຈກ່ຽວກັບການເຄື່ອນຍ້າຍແຮງງານ ແລະ ຄວາມອາດສາມາດ ດຸ່ນດ່ຽງແຮງງານ ໃນລະບົບເສດຖະກິດ.

ມາດຕາ 25. ມອບໃຫ້ອົງການວິທະຍາສາດ ແລະ ເຕັກໂນໂລຊີແຫ່ງຊາດ, ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ປະຕິບັດດັ່ງນີ້:

ສົມທົບກັບມະຫາວິທະຍາໄລແຫ່ງຊາດ ແລະ ສະຖາບັນຄົ້ນຄ້ວາວິທະຍາສາດດຳເນີນ ໂຄງການຄົ້ນຄວ້າວິທະຍາສາດການນຳໃຊ້ ສຳລັບຂະແໜງ ທີ່ເຫັນວ່າເໝາະສົມ ສຳລັບ ສປປ ລາວ ໃນນີ້ ນັບທັງໂຄງການຮ່ວມມືຄົ້ນຄວ້າກັບສາກົນ, ໂຄງການກໍ່ສ້າງນັກຄົ້ນຄວ້າໃນດ້ານຕ່າງໆ ທັງຢູ່ ພາຍໃນ ແລະ ຕ່າງປະເທດ; ສ້າງແຜນລະດົມແຫຼ່ງທຶນ ເຂົ້າໃນການຄົ້ນຄວ້າວິທະຍາສາດ ເຕັກນິກ ຈາກພາຍໃນສົມທົບກັບການຍາດແຍ່ງການຊ່ວຍເຫຼືອຈາກຕ່າງປະເທດ; ສ້າງແຜນນຳໃຊ້ຜົນສຳເລັດ ດ້ານວິທະຍາສາດ ຂອງໂລກເຂົ້າໃນການພັດທະນາ; ຄົ້ນຄວ້າ ແລະ ສົ່ງເສີມພູມປັນຍາຂອງປະຊາຊົນ ເຂົ້າໃນການຜະລິດ, ການບໍລິການ ແລະ ການດຳລົງຊີວິດປະຈຳວັນ. ສືບຕໍ່ປັບປຸງກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ, ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ, ເຜີຍແຜ່ບັນດານິຕິກຳຕ່າງໆ

ທີ່ກ່ຽວຂ້ອງກັບວຽກງານຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ; ເຂົ້າຮ່ວມການສຶກສາໂຄງການ, ຕິດຕາມການປະເມີນຜົນກະທົບຕໍ່ສິ່ງແວດລ້ອມຈາກການປະຕິບັດໂຄງການ. ປຸກລະດົມ ຈິດສຳນຶກຂອງປວງຊົນ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ເປັນຕົ້ນແມ່ນການຮັກສາແຫຼ່ງນ້ຳ ແລະ ການຈຳກັດ ມົນລະພິດ. ຕິດຕາມ ແລະ ພະຍາກອນ ສະພາບອາກາດ ອອກຂ່າວເປັນປົກກະຕິ, ສະໜອງຂໍ້ມູນອຸຕຸການບິນເປັນປົກກະຕິຕໍ່ເນື່ອງ. ເອົາໃຈໃສ່ສຶກສາ, ຄົ້ນຄວ້າ ແລະ ປ້ອງກັນຜົນກະທົບຂອງສິ່ງແວດລ້ອມຈາກການປ່ຽນແປງຂອງດິນຟ້າອາກາດ, ສືບຕໍ່ຮ່ວມມືໃນການປະຕິບັດແຜນງານຫລັກ ຂອງຄະນະກຳມະທິການແມ່ນ້ຳຂອງສາກົນ.

ມາດຕາ 26 ມອບໃຫ້ຂະແໜງການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ອຳນາດການປົກຄອງທຸກຂັ້ນປະຕິບັດດັ່ງນີ້:

ເອົາໃຈໃສ່ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແນໃສ່ເຮັດໃຫ້ທົ່ວປະເທດມີຄວາມສະຫງົບຢ່າງໜັກແໜ້ນ; ຕັ້ງໜ້າປະກອບສ່ວນໃນການສ້າງສາພັດທະນາປະເທດຊາດ; ປຸກລະດົມຂົນຂວາຍ ແລະ ຈັດຕັ້ງມະຫາຊົນເຂົ້າຮ່ວມວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢູ່ຮາກຖານ ໃຫ້ກວ້າງຂວາງ; ເອົາໃຈໃສ່ແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມຢ່າງເດັດຂາດ ເປັນຕົ້ນແມ່ນບັນຫາຢາເສບຕິດ, ການຫລິ້ນກິນຟຸມເຟືອຍ, ອຸປະຕິເຫດບົນທ້ອງຖະໜົນ ແລະ ອາຊະຍາກຳຕ່າງໆ ໂດຍມີມາດຕະການປະຕິບັດຢ່າງລະອຽດ ແລະ ເດັດຂາດ. ກະກຽມຈັດຕັ້ງການສະເຫຼີມສະຫຼອງວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 60 ປີ ໃຫ້ມີຜົນສຳເລັດຢ່າງຈົບງາມ.

ມາດຕາ 27. ມອບໃຫ້ກະຊວງຍຸຕິທຳປະຕິບັດດັ່ງນີ້:

ສົມທົບກັບບັນດາກະຊວງທີ່ກ່ຽວຂ້ອງ ຄົ້ນຄວ້າເພື່ອສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກຳອື່ນໆທີ່ຈະນຳເຂົ້າຜ່ານກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດຊຸດທີ VI ຄັ້ງທີ 6 ແລະ ຄັ້ງທີ 7 ; ເພີ່ມທະວີການໂຄສະນາເຜີຍແຜ່ກົດໝາຍ ຢ່າງເປັນລະບົບ ໃຫ້ກວ້າງຂວາງ ແນໃສ່ ເຮັດໃຫ້ທົ່ວສັງຄົມຮັບຮູ້, ເຂົ້າໃຈດີຂຶ້ນ ແລະ ມີສະຕິເຄົາລົບກົດໝາຍສູງຂຶ້ນ, ເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍມີຄວາມເປັນເອກະພາບໃນທົ່ວປະເທດ ແລະ ມີຄວາມສັກສິດຂຶ້ນ; ປັບປຸງແບບແຜນວິທີ ເຮັດວຽກ ແລະ ຈັນຍາທຳຂອງພະນັກງານ ແນໃສ່ສ້າງຄວາມເຊື່ອໝັ້ນຂອງສັງຄົມ ຕໍ່ອົງການປົກປ້ອງ ກົດໝາຍແຕ່ລະຂັ້ນໃຫ້ນັບມື້ນັບສູງ, ເພີ່ມທະວີຄວາມຖືກຕ້ອງ ແລະ ເປັນທຳໃນການຕັດສິນຄະດີ ຄຽງຄູ່ກັບການເພີ່ມຄວາມສັກສິດ ແລະ ເດັດຂາດ ໃນການປະຕິບັດຄຳຕັດສິນຂອງສານ.

ມາດຕາ 28. ມອບໃຫ້ຄະນະກຳມະການກວດກາຂັ້ນສູນກາງ ແລະ ອົງການກວດສອບແຫ່ງລັດປະຕິບັດດັ່ງນີ້:

ຄົ້ນຄວ້າກົນໄກ ແລະ ລະບຽບການຕິດຕາມກວດກາການປະຕິບັດລາຍຈ່າຍງົບປະມານ ຂອງບັນດາຂະແໜງການສູນກາງ ແລະ ທ້ອງຖິ່ນໃຫ້ເຂັ້ມງວດກວ່າເກົ່າ ເພື່ອຮັບປະກັນໃຫ້ການປະຕິບັດລາຍຈ່າຍໄປຕາມເປົ້າໝາຍ ຂອງແຜນການທີ່ໄດ້ອະນຸມັດ; ກວດກາຄວາມຖືກຕ້ອງສອດຄ່ອງໃນການຈັດຕັ້ງ ແລະ ການນຳໃຊ້ທຶນ ຂອງບັນດາກອງທຶນຕ່າງໆ ທີ່ຂະແໜງການສູນກາງ ແລະ ທ້ອງຖິ່ນສ້າງຕັ້ງຂຶ້ນ ເພື່ອເຮັດໃຫ້ລາຍຮັບ ແລະ ລາຍຈ່າຍລວມສູນຜ່ານບັນຊີງົບປະມານແຫ່ງລັດ ຕາມກົດໝາຍກຳນົດໄວ້ ແລະ ເພື່ອເສີມຂະຫຍາຍຄຸນປະໂຫຍດ ຂອງແຫຼ່ງທຶນຕ່າງໆໄດ້ເປັນຢ່າງດີ; ລົງກວດກາຢ່າງໃກ້ຊິດການຈັດຕັ້ງປະຕິບັດ ຮ່ວງລາຍຮັບ ແລະ ລາຍຈ່າຍຕ່າງໆຂອງງົບປະມານແຫ່ງລັດ ຂອງບັນດາກະຊວງ, ອົງການ ແລະ ແຂວງ ລົງຮອດຂັ້ນເມືອງ ແລະ ບ້ານ; ປະຕິບັດມາດຕະການເຂັ້ມງວດ

ໃນການຕ້ານການສໍ້ລາດບັງຫລວງ ແລະ ເອົາໃຈໃສ່ການຄົ້ນຄວ້າແກ້ໄຂຄໍາຮ້ອງທຸກ ຂໍຄວາມເປັນທໍາຂອງປະຊາຊົນ.

ມາດຕາ 29. ມອບໃຫ້ຄະນະປັບປຸງທຸລະກິດ ປະຕິບັດດັ່ງນີ້:

ສົມທົບກັບກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ ສືບຕໍ່ຄົ້ນຄວ້າປັບປຸງ ວິທີການແກ້ໄຂໜີ້ສິນຂອງລັດວິສາຫະກິດ ໃຫ້ສໍາເລັດເປັນກ້າວໆ ເພື່ອໃຫ້ວິສາຫະກິດ ເລົ່ານັ້ນສາມາດເຄື່ອນໄຫວຢ່າງມີປະສິດທິຜົນດີຂື້ນ; ເອົາໃຈໃສ່ປັບປຸງລະບົບບັນຊີຂອງລັດວິສາຫະກິດໃຫ້ຖືກຕ້ອງ ແລະ ຮັບປະກັນຄວາມໂປ່ງໃສ ແລະ ສາມາດກວດສອບໄດ້; ສືບຕໍ່ປະຕິບັດແຜນປັບປຸງວິສາຫະກິດຢ່າງຕັ້ງໜ້າ ແລະ ມີຜົນສັກສິດໃນການຈັດຕັ້ງປະຕິບັດແຜນດໍາເນີນງານຂອງຕົນ ແລະ ພ້ອມກັນນັ້ນ ກໍານົດລັດວິສາຫະກິດຈໍານວນໜຶ່ງຕື່ມ ທີ່ເປັນເປົ້າໝາຍເພື່ອປັບປຸງ ໃຫ້ເຂັ້ມແຂງ ມີປະສິດທິຜົນ ແລະ ກຽມພ້ອມ ເຂົ້າຈົດທະບຽນຢູ່ຕະຫລາດຫລັກຊັບ ພາຍໃນປີ 2010. ເພີ່ມທະວີການປະສານງານລະຫວ່າງ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ໃນການຄຸ້ມຄອງງົບປະມານຂອງລັດວິສາຫະກິດ; ສືບຕໍ່ຈັດຕັ້ງການກວດກາຄືນຖານະການເງິນ, ການຖືຫຸ້ນ ແລະ ເງິນປັນຜົນຂອງລັດວິສາຫະກິດ, ວິສາຫະກິດຮ່ວມທຶນ ແລະ ວິສາຫະກິດປະສົມ ທີ່ລັດມີຕົວແທນ ຫລື ເປັນຜູ້ຖືຫຸ້ນ ໂດຍແຍກໃຫ້ເຫັນ ລະອຽດອັນໃດແມ່ນເງິນປັນຜົນ, ອັນໃດແມ່ນອາກອນ ແລະ ພາສີປະເພດຕ່າງໆ ທີ່ຈະຕ້ອງສົ່ງ ໃຫ້ລັດຖະບານ ແລະ ອັນໃດແມ່ນລາຍຮັບຂອງລັດວິສາຫະກິດເອງ, ສ້າງຖານຂໍ້ມູນທີ່ກວມເອົາທຸກ ການເຄື່ອນໄຫວຂອງລັດວິສາຫະກິດ ໂດຍສະເພາະກ່ຽວກັບການລົງທຶນ, ລາຍຮັບ-ລາຍຈ່າຍ, ການ ປະກອບພັນທະຕໍ່ລັດຖະບານ ແລະ ອື່ນໆເປັນຕົ້ນ, ຫຼັງຈາກນັ້ນ ໃຫ້ລາຍງານຕໍ່ລັດຖະບານ ເພື່ອຊອກ ຊ່ອງທາງປັບປຸງວິສາຫະກິດດັ່ງກ່າວ ແນໃສ່ຫລຸດຜ່ອນການໃຊ້ຈ່າຍຊໍ້າຊ້ອນ, ຟູມເຟືອຍ ແລະ ເພື່ອຮັບປະກັນການເກັບລາຍຮັບເຂົ້າງົບປະມານ ໄດ້ຢ່າງເຕັມສ່ວນ.

ມາດຕາ 30. ມອບໃຫ້ກະຊວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ປະຕິບັດດັ່ງນີ້:

ຄົ້ນຄວ້າປັບປຸງນະໂຍບາຍ ແລະ ມາດຕະການຕ່າງໆ ໃນການຜັນຂະຫຍາຍກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ, ການແບ່ງ ແລະ ມອບສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ລະຫວ່າງສູນກາງ ແລະ ທ້ອງຖິ່ນໃຫ້ສອດຄ່ອງ, ລະອຽດ ຈະແຈ້ງໃນການຄຸ້ມຄອງເສດຖະກິດ-ສັງຄົມ; ສົມທົບກັບກະຊວງການເງິນ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ຫ້ອງການປັບປຸງທຸລະກິດ ຂອງສໍານັກງານນາຍົກລັດຖະມົນຕີ ຄົ້ນຄວ້າ ນະໂຍບາຍເງິນເດືອນຂອງພະນັກງານ ແລະ ກໍາມະກອນຢູ່ຂົງເຂດລັດວິສາຫະກິດ ເພື່ອເຮັດໃຫ້ພະນັກງານ, ກໍາມະກອນດັ່ງກ່າວມີລະດັບເງິນເດືອນທີ່ສົມເຫດສົມຜົນ. ຮີບຮ້ອນຄົ້ນຄວ້າບັນດານິຕິກໍາຕ່າງໆ ໃນການສ້າງ ເທດສະບານ ໂດຍກໍານົດເອົາແຂວງຫຼວງພະບາງເປັນແຂວງທົດລອງ.

ມາດຕາ 31. ມອບໃຫ້ອົງການຄຸ້ມຄອງທີ່ດິນແຫ່ງຊາດ ປະຕິບັດດັ່ງນີ້:

ສືບຕໍ່ຈັດຕັ້ງສໍາຫຼວດຈັດສັນທີ່ດິນ, ຈັດແບ່ງເຂດ, ແບ່ງປະເພດ, ສ້າງແຜນນໍາໃຊ້ທີ່ດິນ; ແຜນປົກປັກຮັກສາ ແລະ ນໍາໃຊ້ທີ່ດິນ ເພື່ອສະເໜີລັດຖະບານພິຈາລະນາ ແລະ ຜ່ານສະພາຮັບຮອງເອົາ ຕາມທີ່ໄດ້ກໍານົດໃນກົດໝາຍວ່າດ້ວຍທີ່ດິນ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງ ໂດຍສະເພາະການສືບຕໍ່ສ້າງແຜນແມ່ບົດຄຸ້ມຄອງທີ່ດິນແຫ່ງຊາດ ເພື່ອອະນຸລັກເນື້ອທີ່ດິນໃຫ້ມີປ່າໄມ້ປົກຫຸ້ມ, ຮັກສາແຫລ່ງນໍ້າ ແລະ ຊີວະນາງພັນໃຫ້ໄດ້ 70% ຂອງເນື້ອທີ່ດິນທົ່ວປະເທດ ແລະ ກໍານົດເນື້ອທີ່ດິນທີ່ຈະນໍາໃຊ້ 30%

ແລະ ຮັບປະກັນການນຳໃຊ້ທີ່ດິນ ແຕ່ລະປະເພດໄປຕາມເປົ້າໝາຍທີ່ແທ້ຈິງ; ເອົາໃຈໃສ່ຄຸ້ມຄອງ-ບໍລິຫານທີ່ດິນ, ປັບປຸງຂອດປະສານງານ ລະຫວ່າງ ອົງການຄຸ້ມຄອງທີ່ດິນ ແລະ ຂະແໜງການຄຸ້ມຄອງນຳໃຊ້ທີ່ດິນແຕ່ລະປະເພດ ເປັນຕົ້ນແມ່ນການນຳໃຊ້ທີ່ດິນກະສິກຳ, ທີ່ດິນຄົມມະນາຄົມ ແລະ ທີ່ດິນບໍ່ແຮ່ໃຫ້ໄປຕາມເປົ້າໝາຍການລົງທຶນ ເພື່ອສ້າງມູນຄ່າທີ່ດິນໃຫ້ເພີ່ມຂຶ້ນ ແລະ ເຮັດໃຫ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດໄດ້ຮັບການຄຸ້ມຄອງເປັນຢ່າງດີ ແລະ ປະຕິບັດໃຫ້ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງດຳລັດ ວ່າດ້ວຍ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 88/ນຍ ລົງວັນທີ 03 ມິຖຸນາ 2008. ຮີບຮ້ອນຄົ້ນຄວ້າຍຸດທະສາດ, ແຜນງານນຳໃຊ້ຊັບພະຍາກອນແຫ່ງຊາດໄລຍະກາງ ແລະ ໄລຍະຍາວໂດຍໄວເພື່ອຮັບປະກັນການນຳໃຊ້ຊັບພະຍາກອນທຳມະຊາດ ໃຫ້ມີຄວາມຍືນຍົງ ແລະ ມີປະສິດທິຜົນ.

**ມາດຕາ 32.** ມອບໃຫ້ຄະນະກຳມະການກິລາແຫ່ງຊາດ ປະຕິບັດດັ່ງນີ້:

ເອົາໃຈໃສ່ຊຸກຍູ້ສົ່ງເສີມຂະບວນກິລາ ແລະ ພັດທະນາກິລາລາວ ໃຫ້ມີລະດັບສູງຂຶ້ນທາງດ້ານປະລິມານ ແລະ ຄຸນນະພາບ ເພື່ອ ຄັດເລືອກເອົາຜູ້ທີ່ມີພອນສະຫວັນ ເຂົ້າຮ່ວມແຂ່ງຂັນກິລາຊີເກມຄັ້ງທີ 25, ກະກຽມເງື່ອນໄຂໃນທຸກດ້ານໃຫ້ແກ່ການເປັນເຈົ້າພາບ ຊີເກມ ໃຫ້ສຳເລັດທັນຕາມກຳນົດເວລາ. ສົມທົບແໜ້ນກັບແຂວງຈຳປາສັກ ແລະ ພາກສ່ວນຕ່າງໆ ເພື່ອຈັດຕັ້ງກິລາແຫ່ງຊາດ ຄັ້ງທີ VIII ທີ່ແຂວງຈຳປາສັກ ໃນທ້າຍປີ 2008 ໃຫ້ມີຜົນສຳເລັດເປັນຢ່າງດີ.

**ມາດຕາ 33.** ມອບໃຫ້ຫໍພິພິດຕະພັນ ໄກສອນ ພົມວິຫານ ປະຕິບັດດັ່ງນີ້:

ກະກຽມຮອບດ້ານ ເພື່ອກະກຽມພິທີສະເຫຼີມສະຫຼອງ ວັນເກີດຄົບຮອບ 100 ປີ ຂອງອາດີດປະທານສຸພານຸວົງ ທີ່ຈະຈັດຂຶ້ນທີ່ແຂວງຫຼວງພະບາງ ໃນລະຫວ່າງເດືອນ 7/2009 ໃຫ້ເປັນງານລະດັບຊາດ ເພື່ອສະແດງຄວາມຮູ້ບຸນຄຸນ, ຄຸນງາມຄວາມດີ, ວິລະກຳອັນລຳເລີດ ແລະ ຄວາມເສຍສະຫຼະອັນສູງສົ່ງຂອງທ່ານ ແນ່ໃສ່ປຸກລະດົມທົ່ວປວງຊົນ ຍົກສູງນ້ຳໃຈຮັກຊາດ ຮັກບ້ານເກີດເມືອງນອນ ແລະ ຍຶດໝັ້ນແນວທາງນະໂຍບາຍຂອງພັກ.

**ມາດຕາ 34.** ມອບໃຫ້ບັນດາກະຊວງ, ອົງການ, ແຂວງ ແລະ ເມືອງ ປະຕິບັດດັ່ງນີ້:

ອີງໃສ່ພາລະບົດບາດຂອງຕົນຄົ້ນຄວ້າສ້າງວິທີການ ແລະ ມາດຕະການທີ່ລະອຽດ ສອດຄ່ອງກັບນະໂຍບາຍ ແລະ ກົດໝາຍຕ່າງໆ ເພື່ອສ້າງເງື່ອນໄຂລະດົມ ແລະ ສົ່ງເສີມທຸກພາກສ່ວນເສດຖະກິດເຂົ້າຮ່ວມໃນການລົງທຶນຜະລິດສິນຄ້າແລະ ບໍລິການ ໃນຂະແໜງການ ແລະ ທ້ອງຖິ່ນຂອງຕົນ.

**ມາດຕາ 35.** ກ່ຽວກັບການປະຕິບັດລະບຽບການດ້ານພາສີອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ:

ຫ້າມເດັດຂາດ ບໍ່ໃຫ້ຂະແໜງການໃດ, ທ້ອງຖິ່ນໃດ, ບຸກຄົນໃດ ຫຼຸດຜ່ອນ ຫຼື ຍົກເວັ້ນພາສີອາກອນ ແລະ ຄ່າທຳນຽມທຸກປະເພດທີ່ບໍ່ໄດ້ກຳນົດໄວ້ໃນລະບຽບກົດໝາຍຕາມລຳພັງ. ທຸກການຍົກເວັ້ນ ດັ່ງກ່າວນັ້ນ ແມ່ນລັດຖະບານເປັນຜູ້ຕົກລົງ ໂດຍຜ່ານການຄົ້ນຄວ້າ ສະເໜີຂອງກະຊວງການເງິນ. ຖ້າຂະແໜງການໃດ ຫຼື ທ້ອງຖິ່ນໃດຫາກຝ່າຝືນ ແມ່ນຈະຖືກພິຈາລະນາດ້ານວິໄນຢ່າງເຂັ້ມງວດ. ຫ້າມບໍ່ໃຫ້ບຸກຄົນ ແລະ ການຈັດຕັ້ງເກັບຄ່າທຳນຽມ ແລະ ຄ່າບໍລິການ ທີ່ບໍ່ນອນຢູ່ໃນລະບຽບ ກົດໝາຍ. ບັນດາຂະແໜງການ ແລະ ທ້ອງຖິ່ນ ກ່ອນຈະອະນຸມັດເຊັນສັນຍາປະຕິບັດໂຄງການຕ່າງໆ ຕ້ອງໄດ້ຄຳນຶງເຖິງລະບຽບກົດໝາຍກ່ຽວກັບພາສີ, ສ່ວຍສາອາກອນ ແລະ ກົດໝາຍກ່ຽວກັບການສົ່ງເສີມການລົງທຶນພາຍໃນ ແລະ ລົງທຶນຕ່າງປະເທດ ທີ່ໄດ້ປະກາດໃຊ້ແລ້ວ.

ມາດຕາ 36. ມອບໃຫ້ກະຊວງຂະແໜງການຕ່າງໆ ສ້າງບົດແນະນຳ ກ່ຽວກັບວິທີຈັດຕັ້ງປະຕິບັດດຳລັດ ສະບັບນີ້ ແລະສ້າງແຜນດຳເນີນງານລະອຽດດ້ານວິຊາສະເພາະທີ່ກ່ຽວຂ້ອງຂອງຕົນ ສຳລັບສົກປີ 2008-2009 ນັບແຕ່ສູນກາງລົງຮອດທ້ອງຖິ່ນ, ພ້ອມກັນນັ້ນ ກໍ່ໃຫ້ເອົາໃຈໃສ່ໂຄສະນາເຜີຍແຜ່ຜ່ານລະບົບສື່ມວນຊົນຕ່າງໆ ນັບແຕ່ເດືອນກັນຍາ 2008 ເປັນຕົ້ນໄປ.

ມາດຕາ 37: ກ່ຽວກັບການກະກຽມ ສ້າງແຜນ ສົກປີ 2009-2010 ໃຫ້ປະຕິບັດດັ່ງນີ້:

ໃຫ້ກະຊວງ ຂະແໜງການ, ອົງການທຽບເທົ່າ, ນະຄອນຫລວງວຽງຈັນ, ແຂວງຕ່າງໆ ດຳເນີນການສະຫຼຸບຕີລາຄາການຈັດຕັ້ງປະຕິບັດຂາດຕົວ ແຜນພັດທະນາເສດຖະກິດ-ສັງຄົມ ລວມທັງແຜນການລົງທຶນຂອງລັດ ແລະ ແຜນງົບປະມານແຫ່ງລັດ ສົກປີ 2007-2008 ສົ່ງໃຫ້ ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ ກະຊວງຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ກ່ອນວັນທີ 10 ພະຈິກ 2008;

37.1 ມອບໃຫ້ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ອີງໃສ່ດຳລັດສະບັບນີ້ອອກແຈ້ງການ ແລະ ບົດແນະນຳ ເຖິງບັນດາກະຊວງ, ອົງການທຽບເທົ່າ, ນະຄອນຫລວງ ແລະ ແຂວງຕ່າງໆ ເພື່ອສ້າງຮ່າງແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ ປະຈຳສົກປີ 2009-2010 ເພື່ອນຳສະເໜີລັດຖະບານ ແລະ ສະພາແຫ່ງຊາດພິຈາລະນາ.

37.2 ໃຫ້ຂະແໜງການ ແລະ ທ້ອງຖິ່ນ ຖືເອົາດຳລັດສະບັບນີ້ ເປັນບ່ອນອີງໃນການສ້າງແຜນການລົງທຶນຂອງລັດຂອງຕົນ ສຳລັບສົກປີ 2009-2010. ທຸກພາກສ່ວນຈະຕ້ອງສົ່ງເອກະສານໂຄງການທີ່ຈະສະເໜີເອົາເຂົ້າແຜນການລົງທຶນຂອງລັດ ໃຫ້ພາກສ່ວນຮັບຜິດຊອບປະເມີນຜົນ ດຳເນີນການປະເມີນເສຍກ່ອນ; ຖ້າວ່າຂະແໜງການ ແລະ ທ້ອງຖິ່ນໃດ ຫາກສົ່ງເອກະສານບໍ່ທັນໄລຍະປະເມີນຜົນ ເພື່ອສ້າງແຜນປະຈຳປີ ແມ່ນຈະໄດ້ພິຈາລະນາເອົາເຂົ້າແຜນປີຕໍ່ໆໄປ. ໃນກໍລະນີໂຄງການໃດຫາກບໍ່ໄດ້ຮັບການປະເມີນຜົນ ຫຼື ໄດ້ຮັບການປະເມີນຜົນ ແຕ່ຜົນການປະເມີນຢັ້ງຢືນວ່າບໍ່ມີປະສິດທິຜົນ ແມ່ນບໍ່ອະນຸຍາດໃຫ້ ກະຊວງແຜນການ ແລະ ການລົງທຶນ, ຂະແໜງການ ແລະ ທ້ອງຖິ່ນຕ່າງໆ ອະນຸມັດຈັດເຂົ້າໃນຮ່າງແຜນການລົງທຶນຂອງລັດສົກປີ 2009-2010 ທີ່ຈະນຳສະເໜີຕໍ່ລັດຖະບານ ແລະ ສະພາແຫ່ງຊາດ ເພື່ອພິຈາລະນາຮັບຮອງເອົາ.

37.3 ທິດຈຸດສຸມໃນການນຳໃຊ້ທຶນຈາກງົບປະມານຂອງລັດໃນສົກປີ 2009-2010 ແມ່ນໃຫ້ແຕ່ລະຂະແໜງການ ແລະ ທ້ອງຖິ່ນເອົາໃຈໃສ່ ດັ່ງນີ້: (1) ໂຄງການທີ່ມີການຕົກລົງຂອງລັດຖະບານໃຫ້ຄົ້ນຄວ້າເອົາເຂົ້າແຜນ ຫຼື ຕົກລົງຈັດຕັ້ງປະຕິບັດ; (2) ທຶນສົມທົບໂຄງການຊ່ວຍເຫຼືອ ແລະ ກູ້ຢືມຈາກຕ່າງປະເທດ; (3) ໃຊ້ໜີ້ໂຄງການລົງທຶນລັດ ບໍ່ໃຫ້ຫຼຸດ 30% ຂອງທຶນພາຍທັງໝົດຂອງຕົນ; ຖ້າກະຊວງ, ອົງການ ທຽບເທົ່າ ຫຼື ແຂວງໃດ ມີໜີ້ສິນການລົງທຶນຂອງລັດໜ້ອຍກວ່າ 30% ຂອງທຶນພາຍໃນທີ່ຕົນໄດ້ຮັບ ຕ້ອງ ແກ້ໄຂໜີ້ສິນໃຫ້ໝົດໃນສົກງົບປະມານ 2009-2010 ນີ້ເລີຍ; (4) ໂຄງການສືບຕໍ່ ທີ່ເປັນໂຄງການສາມາດນຳໃຊ້ໄດ້ໂດຍໄວ ແລະ ມີປະສິດທິຜົນ; (5) ໂຄງການຫຼຸດຜ່ອນຄວາມທຸກຍາກ ຢູ່ເມືອງທຸກຍາກຕ່າງໆ, (6)ໂຄງການສະເໜີໃໝ່ຕ້ອງຕິດພັນກັບທິດທາງໜ້າທີ່ຈຸດສຸມຂອງແຜນການປີ ແລະ ປິ່ນອ້ອມ 25 ໂຄງການຈຸດສຸມບູລິມະສິດ ໃນ 111 ໂຄງການຈຸດສຸມຂອງລັດຖະບານ ແລະ (7) ໃຫ້ຂະແໜງການ ແລະ ທ້ອງຖິ່ນ ເອົາໃຈໃສ່ໝົດທຸກບູລິມະສິດຢ່າງສົມສ່ວນ, ບໍ່ຄວນສຸມໃສ່ບູລິມະສິດໃດໜຶ່ງຈົນເກີນໄປ. ໃນການປະຕິບັດຕົວຈິງ ໃຫ້ຂະແໜງການ ແລະ ທ້ອງຖິ່ນປະຕິບັດຕາມດຳລັດ ເລກທີ 58/ນຍ ຢ່າງເຂັ້ມງວດ. ໃນສະພາບທີ່ຈະຕ້ອງສຸມໃສ່ເຮັດໃຫ້ເສດຖະກິດ

ປະຫາພາກເຂັ້ມແຂງ, ຊຸກຍູ້ການເຕີບໂຕຂອງເສດຖະກິດ, ຮັບມືກັບການປັ່ນປ່ວນຈາກຄວາມບໍ່ໝັ້ນທ່ຽງຂອງເສດຖະກິດໂລກນັ້ນ ຈະຕ້ອງໄດ້ສຸມທຶນຮອນເຂົ້າໃສ່ການພັດທະນາທາງດ້ານເສດຖະກິດຢ່າງມີຈຸດສຸມ, ສະນັ້ນ ການກໍ່ສ້າງສຳນັກງານ-ອົງການ ທີ່ຈະສະເໜີກໍ່ສ້າງໃໝ່ນັ້ນຄວນໃຫ້ໂຈະໄວ້ກ່ອນ, ຖ້າໃນກໍລະນີທີ່ມີຄວາມ ຈຳເປັນໃນການກໍ່ສ້າງແທ້ໆ ແມ່ນໃຫ້ສະເໜີເຖິງລັດຖະ ບານພິຈາລະນາອະນຸມັດເປັນແຕ່ລະກໍລະນີ.

**ມາດຕາ 38.** ມອບໃຫ້ບັນດາທ່ານລັດຖະມົນຕີວ່າການກະຊວງ , ຫົວໜ້າອົງການທຽບເທົ່າ, ເຈົ້າຄອງນະຄອນຫຼວງ ແລະ ບັນດາເຈົ້າແຂວງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດ ໃຫ້ລັດຖະບານ ໃນແຕ່ລະໄລຍະຢ່າງເປັນປົກກະຕິ.

**ມາດຕາ 39.** ດຳລັດສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ວັນທີ 1 ຕຸລາ 2008 ເປັນຕົ້ນໄປ.

**ນາຍົກລັດຖະມົນຕີແຫ່ງ ສປປ ລາວ**

**ບົວສອນ ບຸບຜາວັນ**